**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.**

**ແຂວງຄຳມ່ວນ**

**ເມືອງຫີນບູນ**

# ແຜນການຕຽມພ້ອມ

*ຕ້ານໄພນ້ຳຖ້ວມຂັ້ນເມືອງປະຈຳສົກປີ 2009 - 2010 ແລະ 2010 - 2015.*

*( ແຜນທີ່ເຂດນ້ຳຖ້ວມຢູ່ເມືອງຫີນບູນ )*




*ປຶ້ມຄູ່ມືສະບັບນີ້ເປັນສະບັບທຳອິດ ແລະ ໄດ້ຈັດພິມຄັ້ງວັນທີ 10/ 6 / 2009.*

## ບົດຄຳເຫັນ

ຂອງທ່ານ ເຈົ້າເມືອງ ໆ ຫີນບູນ

ຂ້າພະເຈົ້າມີຄວາມຮູ້ສຶກ ແລະ ພາກພູມໃຈເປັນຢ່າງຍິ່ງຕໍ່ກັບການຈັດພິມປື້ມຄູ່ມືແຜນການ ກຽມພ້ອມຕ້ານໄພນ້ຳຖ້ວມປະຈຳສຶກປີ 2009 -2010

ເພາະປື້ມຄູ່ມືແຜນການກຽມພ້ອມຕ້ານໄພນ້ຳຖ້ວມຂັ້ນເມືອງ ໆຫີນບູນໃນສຶກປີ 2009 - 2010. ແມ່ນມີຄວາມມາຍ, ຄວາມສຳຄັນຢ່າງເລິກເຊີ່ງ ໃນການວາງແຜນ, ການສຶກສາອົບຮົມ ແລະ ກະຈ່າຍຂໍ້ມູນຂ່າວສານອອກສູ່ສັງຄົມ.ການຈັດພິມປື້ມຄູ່ມືສະບັບນີ້ ແມ່ນໂດຍພາຍໃຕ້ການຮັບຮອງ ຈາກຄະນະ ປະທານ ຊີ້ນຳ ການກຽມພ້ອມຕອບໂຕ້ໄພພິບັດຂັ້ນເມືອງ, ການສັງລວມຂໍ້ມູນແມ່ນໄດ້ມາຈາກການລົງເກັບ ກຳຂໍ້ມູນ ຕົວຈີ່ງຂອງບັນດາພາກສ່ວນຫ້ອງການ ແລະ ອົງການຕ່າງໆທີ່ກ່ຽວຂ້ອງຂັ້ນເມືອງ. ຈາກນັ້ນກອງເລຂາ ໄພພິບັດຂັ້ນເມືອງໄດ້ສັງລວມ ແລະຈັດພິມເປັນ ປື້ມຄູ່ມືສະບັບທຳອິດຂອງເມືອງຫີນບູນ ,ເຊີ່ງມັນຕ່າງກັບ ໜັງສືວາລະສານລາຍວັນ ແລະ ວະລະສານ ອື່ນໆ.ເພາະປື້ມຄູ່ມືດັ່ງກ່າວແມ່ນໄດ້ຈັດພິມ ເນື້ອໃນນິຕິກຳຕ່າງໆທີ່ຖືກຮັບຮອງຈາກການເກັບກຳຂໍ້ມູນຂອງວິຊາການໃນແຕ່ລະປີເລີ້ມແຕ່ປີ 2000 - 2008. ແລະເຫັນວ່າມີຄວາມຈຳເປັນຫຼາຍສຳລັບການວາງແຜນຂັ້ນເມືອງ ໂດຍຕິດພັນກັບແຜນການພັດ ທະນາເສດ ຖະກິດ - ສັງຄົມຂອງເມືອງ.

ກ່ອນຈະສ້າງປື້ມຄູ່ມືສະບັບນີ້ໄດ້ ກໍ່ຍ້ອນມີການຝຶກອົບຮົມ ແລະ ການຖ່າຍຖອດ ຄວາມຮູ້ ຄວາມສາ ມາດ ຈາກອົງການ ADPC ( ກອງເລຂາຄະນະຮັບຜິດຊອບຕ້ານໄພພິບັດຂັ້ນແຂວງ ) ກ່ຽວກັບວິທີຂຽນແຜນກຽມພ້ອມຕອບໂຕ້ໄພພິບັດ ໃຫ້ຄະນະກອງເລຂາຂັ້ນເມືອງ.

ນະໂອກາດທ້າຍນີ້ ຂ້າພະເຈົ້າຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງໄດ້ ໃຫ້ການສະໜັບ ສະໜູນ ແລະໃຫ້ບົດຮຽນແກ່ວິຊາການຂັ້ນເມືອງສາມາດປະຕິບັດໜ້າທີ່ໆໄດ້ຮັບການມອບໝາຍ ຂຽນແຜນການຕອບໂຕ້ໄພພິບັດສະບັບນີ້ສຳເລັດເປັນຢ່າງຈົບງາມ.

***( ຂອບໃຈ )***

ເມືອງຫີນບູນ, ວັນທີ 20 / 07 / 2009

ເຊັນຮັບຮອງໂດຍ

ທ່ານ ອ້ວນມາ ຂັນຕິຍະວົງ ເຈົ້າເມືອງ ໆ ຫີນບູນ

ຜູ້ຊີ້ນຳ : ທ່ານ ອວນມາ ຂັດຕິຍະວົງ ຮອງເຈົ້າເມືອງ ໆ ຫີນບູນ.

ທ່ານ ບຸນນາກ ໄຊຍະວົງ ຫົວໜ້າຫ້ອງການ ແຮງງານ ສະຫວັດດີການ ສັງຄົມ ເມືອງ.

ທ່ານ ຄະນະຊີ້ນຳຈາກຫ້ອງການ ຈຳນວນ 12 ທ່ານ.

ກອງເລຂາ : ທ່ານ ອ່ອນຈັນ ໄຊສັກດາ ຮອງຫົວໜ້າຫ້ອງວ່າການ ເມືອງ.

ທ່ານ ພອນຄຳ ກັດຕິຍະລາດ ໜ່ວຍງານສິ່ງແວດລ້ອມເມືອງ.

ທ່ານ ນິຄົມ ສຸຂະມູນຕີ ຫ້ອງວ່າການປົກຄອງເມືອງ.

ທ່ານ ພະນັກງານວິຊາການໃນຄະນະ 9 ທ່ານ.

-------------------------------------------------------------

## ສາລະບານ


| | ໜ້າ |
|---|---|
| I. ພາກສະເໜີ | 1 |
| 1. ສະພາບຄວາມເປັນມາຂອງໄພນ້ຳຖ້ວມ | 1 |
| 2. ປະສົບການໄພນ້ຳຖ້ວມ ໃນ ແຕ່ລະໄລຍະຜ່ານມາ | 1 |
| 3. ຈຸດປະສົງ ແລະ ຍຸດທະສາດ | 2 |
| 3.1 ຈຸດປະສົງ | 2 |
| 3.2 ຍຸດທະສາດການຄຸ້ມຄອງໄພພິບັດ | 2 |
| 4. ຄວາມຮັບຜິດຊອບ ແລະ ສິດຂອບເຂດ ຂອງຄະນະກຳມະການ | 3 |
| 4.1 ພາລະບົດບາດຂອງຄະນະກະມະການຂັ້ນເມືອງ | 3 |
| 4.2 ພາລະບົດບາດຂອງຄະນະກອງເລຂາຂັ້ນເມືອງ | 3 |
| 4.3 ພາລະບົດບາດຂອງເຈົ້າເມືອງ | 3 |
| 5. ວັນເດືອນປີກະກຽມແຜນການ ແລະ ບັນທຶກປັບປຸງແຜນການ | 4 |
| 5.1 ການທົບທວນ ແລະ ປັບປຸງແຜນ | 4 |
| II. ສະພາບລວມຂອງເມືອງ | 4 |
| 2.1 ສະພາບທີ່ຕັ້ງ ແລະພູມສັນຖານ ຂອງ ເມືອງ | 4 |
| 2.2 ແຜນທີ່ຂອງເມືອງ | 5 |
| 2.3 ສະພາບດ້ານການປົກຄອງ | 6 |
| 2.4 ການດຳລົງຊີວິດຂອງຊາວເມືອງຫີນບູນ | 6 |
| 3. ໂຄງສ້າງພື້ນຖານໃນແຕ່ລະດ້ານ | 7 |

| | |
|---|---|
| 3.1 ດ້ານຄົມມະນາຄົມ | 7 |
| 3.2 ດ້ານຊົນລະປະທານ | 7 |
| 3.3 ດ້ານວັດທະນະທຳ - ສັງຄົມ | 7 |
| III. ການວິເຄາະຄວາມສາມາດ, ຜູ້ທີ່ຜົນກະທົບງ່າຍ ແລະ ໄພອັນຕະລາຍຈາກນ້ຳຖ້ວມ | 8 |
| 3.1 ສາຍເຫດ ແລະ ລະດູການໄລຍະນ້ຳຖ້ວມ | 8 |
| 3.2 ປະລິມານຄວາມແຮງ ແລະ ພື້ນທີ່ຖືກນ້ຳຖ້ວມ | 8 |
| 3.3 ສັງລວມມູນຄ່າຜົນເສຍຫາຍຈາກໄພນ້ຳຖ້ວມໃນແຕ່ລະຂົງເຂດ | 9 |
| 4 ຂົງເຂດຕ່າງໆທີ່ມີຄວາມສ່ຽງຈາກໄພນ້ຳຖ້ວມ. | 9 |
| 4.1 ຂົງເຂດສັງຄົມ ແລະ ການປົກຄອງ | 10 - 13 |
| IV. ຄວາມສາມາດ ແລະ ແຫຼ່ງວັດຖຸ | 13 - 15 |
| V. ດ້ານການຈັດຕັ້ງສຳລັບວຽກງານຄູ້ມຄອງໄພພິບັດ | 15 |
| 1. ຄະນະຄູ້ມຄອງໄພພິບັດຂັ້ນເມືອງ | 15 - 16 |
| 1.1 ພາລະບົດບາດຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ( DDMC ) | 16 - 22 |
| 2. ບັນດາທີມງານໄພພິບັດຂັ້ນເມືອງ | 22 |
| VI. ມາດຕະການຕຽມພ້ອມຕ້ານໄພນ້ຳຖ້ວມ | 23 |
| 6.1 ກິດຈະກຳຕຽມພ້ອມຕອບໂຕ້ໄພພິບັດ ( ນ້ຳຖ້ວມ ) | 23 - 24 |
| 6.2 ການປະຕິບັດມາດຕະການຕອບໂຕ້ | 24 - 25 |
| VII. ການປັບປຸງຟື້ນຟູໃຫ້ຄືນສູ່ສະພາບເດີມ | |
| 7.1 ກິດຈະກຳຂອງການປັບປຸງ ເພື່ອໃຫ້ຄືນສູ່ສະພາບເດີມ | 25 - 26 |
| 8. ມາດຕະການຫຼຸດຜ່ອນ | |
| 8.1 ໂຄງສ້າງການຫຼຸດຜ່ອນ | 26 - 27 |
| 9. ການຈັດສັນງົບປະມານ ແລະ ຄວາມຕ້ອງການແຫຼ່ງຊັບພະຍາກອນອື່ນໆ | 27 - 29 |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********************

ແຂວງຄໍາມ່ວນ
ເມືອງຫີນບູນ                                                                 ເລກທີ . . . . . .   /ຫວກ ຫບ

ແຜນການຕຽມພ້ອມຕ້ານໄພນໍ້າຖ້ວມປະຈໍາສົກປີ 2009-2010

ບ່ອນອີງ:

- ອີງຕາມ ແຜນພັດທະນາເສດຖະກິດ - ສັງຄົມຂອງເມືອງ 5 ປີ 2005 - 2010 ແລະ 2010 - 2015 . .
- ອີງຕາມ ຂໍ້ຕົກລົງແຕ່ງຄະນະເຈົ້າເມືອງໆຫີນບູນ ສະບັບ ເລກທີ 203 /ຈມ.ຫບ ລົງວັນທີ3/4/2007 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ.

1. ພາກສະເໜີ
   1. ສະພາບຄວາມເປັນມາຂອງໄພພິບັດ.

      ຍ້ອນທີ່ຕັ້ງພູມສັນຖານຂອງເມືອງຊຶ່ງເປັນເມືອງທີ່ຕັ້ງຢູ່ລະຫວ່າງກາງ ແມ່ນໍ້າໃຫ່ຍສາມສາຍ ( ແມ່ນໍ້າຂອງ , ແມ່ນໍ້າຫີນບູນແລະແມ່ນໍ້າປະກັນ)ພ້ອມທັງມີແມ່ນໍ້າໄຊ ທີ່ເຊື່ອມເທີນຕົກໃສ່, ເມືອງຫີນບູນເປັນເມືອງທີ່ມີຄວາມສ່ຽງສູງຕໍ່ການເກີດໄພພິບັດຈາກນໍ້າຖ້ວມ ,ໃນໄລຍະຜ່ານມາກໍໄດ້ຖືກໄພທໍາມະຊາດຂົ່ມຂູ່ເກືອບທຸກປີຕົ້ນຕໍແມ່ນນໍ້າຖ້ວມແລະລົມພະຍຸ, ສົ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນພາຍໃນເມືອງຢ່າງຫຼວງຫຼາຍກວມເອົາຂົງເຂດວັດທະນະທໍາ - ສັງຄົມ,ຂົງເຂດການເມືອງ, ຂົງເຂດເສດຖະກິດ..
   2. ປະສົບການໄພນໍ້າຖ້ວມໃນໄລຍະຜ່ານມາ

      ໃນຮອບ 8 ປີຜ່ານມາ (2000-2008) ຜົນກະທົບຈາກໄພນໍ້າຖ້ວມໄດ້ເຮັດໃຫ້ພວກເຮົາຄະນະພັກ-ອົງການປົກຄອງແຕ່ລະຂັ້ນ(ເມືອງ-ບ້ານ)ຕະຫຼອດຮອດປະຊາຊົນໃນເຂດທີ່ຖືກກະທົບໄດ້ຮັບບົດຮຽນ ແລະ ປະສົບການຫຼາຍດ້ານເຊັ່ນ:
      ການກະກຽມຕ້ານໄພນໍ້າຖ້ວມ , ການປຸກລະດົມຂົນຂວາຍພາກສ່ວນຕ່າງໆມີສ່ວນຮ່ວມໃນການເຄື່ອນໄຫວປະຕິບັດກິດຈະກໍາປ້ອງກັນ,ຕ້ານແລະທົດແທນຜົນກະທົບຈາກໄພນໍ້າຖ້ວມ
      ສິ່ງສໍາຄັນຄະນະກໍາມະການຂັ້ນເມືອງແມ່ນໄດ້ເອົາໃຈໃສ່ເປັນພິເສດຕໍ່ກັບ
      ການຈັດຕັ້ງປະຕິບັດພາລະບົດບາດ- ໜ້າທີ່ຄວາມຮັບຜິດຊອບຂອງຕົນ ຊຶ່ງສະແດງອອກໃນປີ 2005 ທີ່ແມ່ນປີໄພນໍ້າຖ້ວມທີ່ຮ້າຍແຮງ; ຜົນກະທົບແຕ່ລະດ້ານຈາກໄພນໍ້າຖ້ວມໃນຮອບ 8 ປີ

+ ຕາຕະລາງໄພນ້ຳຖ້ວມບ້ານພາຍໃນເມືອງແຕ່ປີ 2000-2008

| 2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|---|
| 155 | 147 | 91 | 65 | 96 | 126 | 120 | 70 | 135 |

3 ຈຸປະສົງ ແລະ ຍຸດທະສາດ

3.1. ຈຸດປະສົງ:

- ເພື່ອເປັນການເຊື່ອມສານແຜນຍຸດທະສາດໃນການຄຸ້ມຄອງໄພພິບັດແຫ່ງຊາດ ແລະ ລະດັບແຂວງ

- ເພື່ອເປັນການກະກຽມຄວາມພ້ອມສຳລັບການປ້ອງກັນ,ສະກັດກັ້ນ,ຕອບໂຕ້ –ແລະ ຟື້ນຟູທົດແທນຜົນກະທົບຈາກໄພພິບັດຊຶ່ງອາດສາມາດເກີດຂື້ນໃນທຸກປີ

- ເພື່ອເປັນບ່ອນອີງໃນການເຄື່ອນໄຫວຕິດຕາມ ຊຸກຍູ້ ແລະ ສະຫຼຸບຕີລາຄາປະເມີນຜົນຂອງການຈັດຕັ້ງປະຕິບັດແຜນງານ ກິດຈະກຳຕ່າງໆສຳລັບປ້ອງກັນ.

- ໃຫ້ຄວາມສະດວກແກ່ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ-ແຂວງ,ພ້ອມກັບການນຳຂອງເມືອງ-ແຂວງໃນການຊີ້ນຳໆພາການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ຂອງບັນດາທີມງານ ແລະຄະນະກຳມະການຢູ່ພາກສະໜາມໃນແຕ່ລະໄລຍະ ແຕ່ລະທ້ອງຖິ່ນຢ່າງໃກ້ສິດແລະແທດເໝາະກັບສະພາວະຄວາມເປັນຈິງ.

- ເປັນເຄື່ອງມືທີ່ສຳຄັນໃຫ້ແກ່ທີມງານຕ່າງໆທີ່ເຮັດວຽກໃນພາກສະໜາມມີຄວາມຄ່ອງແຄ້ວແລະວ່ອງໄວ ທວງທັນກັບສະພາບການ

3.2 ຍຸດທະສາດການຄຸ້ມຄອງໄພພິບັດ

- ກຳນົດຂົງເຂດ ແລະ ພື້ນທີ່ໆມີຄວາມສ່ຽງສູງຂອງການເກີດໄພພິບັດນ້ຳຖ້ວມໄປຄວບຄູ່ກັບການສ້າງແຜນງານ,ໂຄງການ ແລະ ກິດຈະກຳ ສຳລັບກະກຽມການປ້ອນກັນ,ສະກັດກັ້ນ,ຕອບໂຕ້ ແລະຟື້ນຟູທົດແທນຜົນກະທົບຈາກໄພພິບັດດັ່ງກ່າວ,ພ້ອມທັງສົ່ງເສີມການປົກປັກຮັກສາສິ່ງແວດລ້ອມແລະແຫຼ່ງຊັບພະຍາກອນຂອງທ້ອງຖິ່ນໃຫ້ໝັ້ນຄົງ.

- ທຸກກຳລັງແຮງແລະໜູນໃຊ້ຢ່າງປະດິດສ້າງຂອງົຫຼາແຮງບົ່ມຊ້ອນພາຍໃນເມືອງແລະທ້ອງຖິ່ນຮາກຖານ ໄປພ້ອມໆກັບການຍາດແຍ່ງ ເພື່ອປະກອບສ່ວນເຂົ້າໃນຂະບວນການເຄື່ອນໄຫວທີ່ມີປະສິດທິພາບ.

- ຄຽງຄູ່ກັບການນຳໃຊ້ທ່າແຮງແຫຼ່ງຊັບພະຍາກອນທີ່ມີໃນທ້ອງຖິ່ນຕ້ອງມີການຍາດແຍ່ງຂໍການສະໜັບສະໜູນຊ່ວຍເຫຼືອທາງດ້ານແຫຼ່ງທຶນ ແລະ ວັດຖຸອຸປະກອນຈາກພາກສ່ວນຕ່າງໆຂອງສັງຄົມເຊັ່ນ: ອົງການຈັດຕັ້ງສາກົນ,ນັກທຸລະກິດ,ຫ້າງຮ້ານ,ແມ່ຄ້າຊາວຂາຍ.....

ໂດຍສະເພາະແມ່ນໂຄງການ ADPC ຂອງອົງການ MRC ດັ່ງນີ້ເປັນຕົ້ນ

- ຍາດແຍ່ງຂໍການສະໜັບສະໜູນສຳລັບການກໍ່ສ້າງພື້ນຖານໂຄງລ່າງທີ່ເປັນຍຸດທະສາດສຳລັບການປ້ອງກັນ ແລະຫຼຸດຜ່ອນຜົນກະທົບຈາກໄພພິບັດເຊັ່ນ: ການສ້າງທົ່ນທາງເລາະລຽບຕາມແຄມຂອງ,ທາງເຂົ້າບໍ່ໂພນຕົ້ວແລະລະບົບຊົນລະປະທານຕາມຄວາມເໝາະສົມ.

.4 ຄວາມຮັບຜິດຊອບ ແລະ ສິດຂອບເຂດຂອງແຜນການ

.4.1 ພາລະບົດບາດຂອງຄະນະກຳມະການຂັ້ນເມືອງ

- ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງແມ່ນຖືກແຕ່ງຕັ້ງຂື້ນໂດຍທ່ານເຈົ້າເມືອງ,ຊຶ່ງແມ່ນທ່ານຮອງເຈົ້າເມືອງເປັນປະທານ ແລະປະກອບເອົາບັນດາທ່ານຫົວໜ້າ-ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງຮວມເປັນກຳມະການ ຄະນະກຳມະການຂັ້ນເມືອງມີຄະນະກອງເລຂາຊຶ່ງແມ່ນຮອງຫົວໜ້າຫ້ອງວ່າການປົກຄອງເມືອງເປັນຫົວໜ້າ ແລະ ເຮັດໜ້າທີ່ເປັນເສນາທິການໃຫ້ແກ່ການນຳຂັ້ນເມືອງ.

- ມີພາລະບົດບາດ ໜ້າທີ່ກຳນົດແນວທາງ ແລະຍຸດທະວິທີໃນການສ້າງໂຄງການການດຳເນີນງານ,ແຜນງານ,ໂຄງການ ແລະ ກິດຈະກຳຕ່າງໆເພື່ອກະກຽມຄວວາມພ້ອມສຳລັບປ້ອງກັນ,ສະກັດກັ້ນ,ຕອບໂຕ້ ແລະ ຟື້ນຟູທົດແທນຜົນກະທົບຈາກໄພພິບັດ,ເພື່ອຫຼຸບຜ່ອນການສູນເສຍ ຊັບສິນຂອງລັດ ແລະ ປະຊາຊົນບັດດາເຜົ່າ.

- ຕິດຕາມ ກວດກາ ແລະ ເກັບກຳສະພາບການຕ່າງໆທີ່ເກີດຂື້ນໃນເວລາເຄື່ອນໄຫວຈັດຕັ້ງປະຕິບັດແຜນງານ ໂຄງການ ໃນແຕ່ລະໄລຍະເຊັ່ນ: ກ່ອນເກີດໄພພິບັດ, ໄລຍະເກີດໄພພິບັດ ແລະ ໄລຍະຫຼັງຈາກໄພພິບັດ.

- ເຄື່ອນໄຫວຈັດຕັ້ງປະຕິບັດແຜນງານ ໂຄງການ ແລະກິດຈະກຳຕ່າງໆໃນແຕ່ລະໄລຍະຈັດຕັ້ງກອງປະຊຸມສະຫຼຸບ-ສັງລວມ ຜົນການເຄື່ອນໄຫວ ແລະກຳນົດແຜນການແຕ່ລະໄລຍະພ້ອມທັງລາຍງານຜົນການເຄື່ອນໄຫວຂອງຕົນໃຫ້ແກ່ເຈົ້າເມືອງ ແລະ ຄະນະກຳມະການຂັ້ນແຂວງຢ່າງເປັນປົກກະຕິ; ກໍລະນີຫາກເກີດກໍລະນີອັນຈຳເປັນຮີບດ່ວນຄະນະກຳມະການສາມາດຈັດກອງປະຊຸມວິສາມັນຂື້ນເພື່ອຕົກລົງແກ້ໄຂບັນຫາໃຫ້ທວງທັນກັບສະພາບການ.

4.2 ພາລະບົດບາດຂອງຄະນະກອງເລຂາຂັ້ນເມືອງ:

ສຳລັບຄະນະກອງເລຂາແມ່ນມີ ພາລະບົດບາດ ແລະ ຄວາມຮັບຜິດຊອບເປັນເສນາທີ່ການໃຫ້ແກ່ຄະນະກຳມະການເຊັ່ນ: ການເກັບກຳຂໍ້ມູນ,ສັງລວມຂໍ້ມູນ,ວິໃຈຂໍ້ມູນ,ຮ່າງແຜນງານ ໂຄງການໆເຄື່ອນໄຫວ ແລະບັນດານິຕິກຳຕ່າງໆໃຫ້ແກ່ຄະນະກຳມະການ;ຕິດຕາມເຝົ້າລະວັງ,ຮັບການລາຍງານຈາກບັນດາທີມງານທີ່ກ່ຽວຂ້ອງ ແລະ ເຄື່ອນໄຫວຕິດຕາມປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງນັບທັງຂັ້ນເມືອງ ແລະ ຂັ້ນແຂວງ ກະກຽມບັນດາປັດໃຈຈຳເປັນສຳລັບການເຄື່ອນໄຫວຕ່າງໆຂອງຄະນະກຳມະການ ແລະ ທີມງານ ກະກຽມຄວາມພ້ອມສຳລັບການຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນຂອງຄະນະກຳມະການໃນແຕ່ລະໄລຍະ

4.3 ພາລະບົດບາດຂອງເຈົ້າເມືອງ

ເຈົ້າເມືອງແມ່ນຜູ້ນຳສູງສຸດພາຍໃນເມືອງ ແລະ ສິດອະນຸມັດ,ສັ່ງການ,ອອກຂໍ້ກຳ

ນິດກິດລະບຽບຕ່າງໆທີ່ພົວພັນເຖິງການເຄື່ອນໄຫວຂອງຄະນະກຳມະການ, ສຳລັບການປ້ອງກັນ,ສະກັດກັ້ນ,ຕອບໂຕ້ ແລະ ຟື້ນຟູທົດແທນຜົນກະທົບຈາກໄພພິບັດ ຊຶ່ງອາດສາມາດເກີດຂື້ນໄດ້ໃນທຸກປີ

5. ວັນເດືອນປີກະກຽມແຜນການ ແລະ ບັນທຶກປັບປຸງແຜນການ

5.1. ປີກະກຽມແຜນ ແລະ ໝົດອາຍຸແຜນ

- ກະກຽມແຜນການເດືອນມີນາ 2009
- ອາຍຸຂອງແຜນການ ທັນວາ 2010

5.2 ການທົບທວນ ແລະ ປັບປຸງແຜນ

- ທົບທວນແຜນການຫລັງຈາກນ້ຳຖ້ວມ ແລະ ວາງແຜນເພື່ອກຳນົດມາດຕະການປ້ອງກັນໄພນ້ຳຖ້ວມ

- ປັບປຸງແຜນການເດືອນ ກໍລະກົດ 2010

II. ສະພາບລວມຂອງເມືອງ

2.2. ພື້ນທີ່ກວມລວມ

2.2. ສະພາບທີ່ຕັ້ງພູມສັນຖານຂອງເມືອງ

ເມືອງຫີນບູນເປັນເມືອງໜຶ່ງທີ່ຕັ້ງຢູ່ດ້ານເໜືອຂອງແຂວງຄຳມ່ວນ,ທິດເໜືອຕິດກັບເມືອງປາກກະດິງ, ເມືອງຄຳເກີດ ແຂວງບໍລິຄຳໄຊ,ທິດໃຕ້ຕິດກັບເມືອງທ່າແຂກ,ທິດຕາເວັນອອກຕິດກັບເມືອງນາກາຍແລະ ເມືອງຍົມມະລາດ ແລະທິດຕາເວັນຕົກຕິດກັບ ອຳເພີທ່າອຸເທນ,ອຳເພີບ້ານແພງ ຈັງຫວັດນະຄອນພະນົມປະເທດໄທ ມີຄວາມຍາວ 62 km

- ເມືອງຫີນບູນມີເນື້ອທີ່ 3.011 km ໃນນັ້ນມີເນື້ອທີ່ທຳການຜະລິດກະສິກຳ ຈຳນວນ11.964ເຮັກຕາ

( ເນື້ອທີ່ປູກເຂົ້າ 10.634 ຮຕ, ເນື້ອທີ່ສ່ວນ 1.360 ຮຕ), ເນື້ອທີ່ປ່າໄຄກ ຮຕ, ເນື້ອທີ່ບຶງໜອງ ຮຕ ; ເປັນເມືອງທີ່ມີອຸນຫະພູມອົບອຸ່ນຂ້ອນຂ້າງຮ້ອນ ມີ 02ລະດູ ຄື: ລະດູແລ້ງແລະລະດູຝົນປະລິມານນ້ຳຝົນສະເລັ່ຍໃນປີນ້ຳຖ້ວມຫຼາຍປະມານ 6.219,18 ມິລິແມັດ,ປີນ້ຳຖ້ວມປານກາງປະມານ 2.248 ມິລິແມັດ ແລະປີນ້ຳຖ້ວມໜ້ອຍປະມານ 1.231,9 ມິລິແມັດ

- ດິນທີ່ຖືກນ້ຳຖ້ວມສ່ວນຫຼາຍແມ່ນການຜະລິດກະສິກຳ(ປູກຝັງ-ລ້ຽງສັດ) ຊຶ່ງການປູກຝັງສ່ວນໃຫ່ຍແມ່ນການປູກເຂົ້ານາປີ, ນາແຊງ ແລະ ດິນປູກພືດສຳຮອງເປັນຕົ້ນ.

- ສ່ວນຮູບແບບຂອງການຄຸ້ມຄອງນຳໃຊ້ທີ່ດິນ ສ່ວນຫຼວງຫຼາຍແມ່ນການຂຶ້ນທະບຽນທີ່ດິນແລະການນຳໃຊ້ໃບແຈ້ງພາສີທີ່ດິນຊຶ່ງກວມເອົາເຖິງ 80 %

## 2.4 ແຜນທີ່ຂອງເມືອງຫີນ




ສີບົວແມ່ນບ້ານທີ່ມີຄວາມສ່ຽງປະເພດ1
ສີສົ້ມແມ່ນບ້ານທີ່ມີຄວາມສ່ຽງປະເພດ2

2.4 ສະພາບດ້ານການປົກຄອງ

ເມືອງຫີນບູນປະກອບມີ 16 ກຸ່ມບ້ານ, ມີ 131 ບ້ານ, ມີ 11.247 ຫຼັງຄາເຮືອນ,ມີ 11.761 ຄອບຄົວ ປະຊາຊົນທັງໝົດມີ 62.044 ຄົນ , ຍິງ 31.112 ຄົນ ລາຍລະອຽດດັ່ງ ຕາຕະລາງລຸ່ມນີ້:

+ ຕາຕະລາງສັງລວມສະຖິຕິດ້ານການປົກຄອງ:

| ລ/ດ | ຊື່ກຸ່ມບ້ານ | ຈຳນວນບ້ານ | ຈຳນວນ ຫຼັງຄາ | ຈຳນວນ ຄອບຄົວ | ຈຳນວນພົນລະເມືອງ | | ໝາຍເຫດ |
|---|---|---|---|---|---|---|---|
| | | | | | ລວມ | ຍິງ | |
| 1 | ກູບ | 6 | 338 | 344 | 2.038 | 1.066 | |
| 2 | ນາເມືອງ | 4 | 316 | 311 | 1.853 | 936 | |
| 3 | ນາພວກ | 5 | 442 | 470 | 2.656 | 1.338 | |
| 4 | ຄູນຄຳ | 9 | 1.146 | 1.117 | 6.874 | 3.428 | |
| 5 | ທ່ານາ | 8 | 602 | 651 | 3.494 | 1.752 | |
| 6 | ສອງຄອນ | 7 | 321 | 350 | 1.838 | 921 | |
| 7 | ຫີນຄັນ | 10 | 649 | 691 | 3.617 | 1.782 | |
| 8 | ເລົ່າຄາ | 10 | 702 | 686 | 3.540 | 1.704 | |
| 9 | ສາມັກຄີໄຊ | 9 | 908 | 904 | 4.835 | 2.467 | |
| 10 | ບໍ່ແໜ່ງ | 8 | 483 | 485 | 2.777 | 1.404 | |
| 11 | ໂພນຕິ້ວ | 8 | 897 | 960 | 4.929 | 2.499 | |
| 12 | ນາໂພ | 10 | 1.032 | 1.099 | 5.894 | 2.906 | |
| 13 | ຫີນບູນ | 12 | 831 | 887 | 4.591 | 2.200 | |
| 14 | ນາບອນ | 9 | 676 | 745 | 3.404 | 1.726 | |
| 15 | ດອນລັບ | 7 | 372 | 441 | 1.721 | 880 | |
| 16 | ພົງ | 5 | 704 | 707 | 3.453 | 1.705 | |

II. ບ້ານໃຫຍ່ທີ່ຂຶ້ນກັບເມືອງ

| | | | | | | |
|---|---|---|---|---|---|---|
| 1 | ບ້ານ ກອງລໍ | 167 | 192 | 1.045 | 538 | |
| 2 | ບ້ານ ນາກາງ | 174 | 173 | 997 | 504 | |
| 3 | ບ້ານ ປຸງເໜືອ | 264 | 312 | 1.296 | 688 | |
| 4 | ບ້ານ ຫີນບູນໃຕ້ | 223 | 236 | 1.192 | 598 | |

2.5. <u>ການດຳລົງຊີວິດຂອງຊາວເມືອງຫີນບູນ</u>

- ທົ່ວເມືອງຫີນບູນ ປະກອບມີ...2 ຊົນເຜົ່າ , ຊົນເຜົ່າລາວລຸ່ມກວມເອົາ 99,99 % ຂອງຈຳນວນ ບ້ານທັງໝົດ ແລະ ຊົນເຜົ່າລາວເທິງ 0,01 % ; ພາຍໃນເມືອງມີການເຊື້ອຖືສາດສະໜາພຸດເປັນສ່ວນ ໃຫຍ່ ແລະ ອີກປະມານ 0,01 % ແມ່ນັບຖືສາດສະໜາກາໂຕລິກ.

- ປະຊາຊົນສ່ວນໃຫຍ່ມີອາຊີບເຮັດນາຜະລິດກະສິກຳ ( ປູກຝັງ - ລ້ຽງສັດ ) ຊຶ່ງກວມເອົາ 90 % ຂອງຈຳນວນປະຊາກອນທັງໝົດ

## 3. ໂຄງລ່າງພື້ນຖານແຕ່ລະດ້ານ

### 3.1. ດ້ານຄົມມະນາຄົມ .

- ເມືອງຫີນບູນເປັນເມືອງໜຶ່ງທີ່ມີລະບົບເສັ້ນທາງສາມາດໄປມາຫາສູ່ກັນໄດ້ທັງສອງລະດູແລະທະລຸໂລ່ງກັນເກືອບໝົດທຸກບ້ານ ທົ່ວເມືອງມີເສັ້ນທາງທັງໝົດ 72 ເສັ້ນ , ມີຄວາມຍາວທັງໝົດ 526.76 ກິໂລແມັດ; ທາງທີ່ສາມາດໄປມາໄດ້ 2 ລະດູມີ 24 ເສັ້ນ ມີຄວາມຍາວ 282.2 ກິໂລແມັດ; ຊຶ່ງລາຍລະອຽດຈະສະແດງໃນຕາຕະລາງລຸ່ມນີ້:

| ລ/ດ | ຊື່ເສັ້ນທາງ | ຈຳນວນເສັ້ນ | ຄວາມຍາວ | ໝາຍເຫດ |
|---|---|---|---|---|
| 1 | ທາງແຂວງຄຸ້ມຄອງ13 ໄຕ້ | 3 | 151 km | |
| 2 | ທາງຂອງເມືອງຄຸ້ມຄອງ | 1 | 8.150 km | |
| 3 | ທາງເທສະບານ | 13 | 11.16 km | |
| 4 | ທາງດິນແດງ | 18 | 95.7 km | |
| 5 | ທາງຊຸມຊົນ | 37 | 260.75 km | |
| | ລວມ | 72 | 526.76 km | |

- ນອກຈາກເສັ້ນທາງແລ້ວກໍ່ຍັງມີຂົວອີກຈຳນວນ.32 ແຫ່ງ

### 3.2. ດ້ານຊົນລະປະທານ

ເມືອງຫີນບູນເປັນເມືອງທີ່ມີລະບົບຄອງເໝືອງຊົນລະປະທານ..62 ໂຄງການ ແລະສາມາດທົດຜື້ນທີ່ນາໄດ້..300 ແຮັກຕາ

### 3.3.ດ້ານວັດທະນາທຳສັງຄົມ

ພາຍໃນເມືອງຫີນບູນປະກອບມີຫຼາຍສິ່ງສາທາລະນະປະໂຫຍດ ເຊິ່ງໄດ້ຖືກແຈກຢາຍແຕ່ລະຂະແໜງການໃນຂົງເຂດວັດທະນາທຳສັງຄົມ ສິ່ງທີ່ສຳຄັນພໍສັງລວມໂດຍສັງເຂບໃນຕາຕະລາງຕໍ່ໄປນີ້

+ ຕາຕະລາງພື້ນຖານໂຄງລາງດ້ານວັດທະນາທຳ-ສັງຄົມ

| ລ/ດ | ເນື້ອໃນລາຍການ | ຫົວໜ່ວຍ | ຈຳນວນ | ໝາຍເຫດ |
|---|---|---|---|---|
| 1 | ໂຮງຮຽນປະຖົມ | ແຫ່ງ | 130 | |
| 2 | ໂຮງຮຽນມັດທະຍົມຕົ້ນ | ແຫ່ງ | 10 | |
| 3 | ໂຮງຮຽນມັດທະຍົມສົມບູນ | ແຫ່ງ | 7 | |
| 4 | ວັດແລະໂບດ | ແຫ່ງ | 140 | ໂບດ 1 ແຫ່ງ |
| 5 | ໂຮງໝໍເມືອງ | ແຫ່ງ | 1 | |
| 6 | ໂຮງໝໍເຂດ | ແຫ່ງ | 1 | |
| 7 | ສຸກສາລາ | ແຫ່ງ | 16 | |

| | | | | |
|---|---|---|---|---|
| 8 | ຈຳນວນບໍ່ບາດານ | ບໍ່ | 666 | |
| 9 | ຈຳນວນນ້ຳສ້າງແຄງສີມັງ | ບໍ່ | 3.981 | |
| 10 | ໂຮງງານນ້ຳດື່ມ | ແຫ່ງ | 3 | |
| 11 | ນ້ຳລິນ | ແຫ່ງ | 1 | |

## III. ການວິເຄາະຄວາມອາດສາມາດ, ຜູ້ທີ່ຖືກກະທົບໄດ້ງ່າຍແລະໄພອັນຕະລາຍ

### 3.1.ສາຍເຫດແລະລະດູການແລະໄລຍະນ້ຳຖ້ວທ

### ກ. ສາຍເຫດຂອງນ້ຳຖ້ວມ

ໄພນ້ຳຖ້ວມທີ່ເກີດຂື້ນພາຍໃນເມືອງຫີນບູນ: ແມ່ນມາຈາກຜົນກະທົບເຂື່ອນເທີນຫີນບູນ, ແມ່ນມາຈາກການໄຫຼລົ້ນຂອງຝັ່ງຂອງ, ນ້ຳ ຫີນບູນ, ນ້ຳປະກັນ ແລະ ນ້ຳໄຮ, ເຊິ່ງມີຈຸດທີ່ແຫຼມຢູ 8.. ຈຸດ ສາຍເຫດລອງລົງມາແມ່ນນ້ຳຝົນທີ່ອັ່ງຢູ່ຕາມຫ້ວຍຮ່ອງຄອງບຶງຕ່າງໆ ແລະ ບໍ່ມີຄອງລະບາຍເຕັມຄວາມສາມາດຂອງມັນໃນແຕ່ລະຈຸດ.

## ຂ. ລະດູການໄລຍະນ້ຳຖ້ວມ.

ລະດູການນ້ຳຖ້ວມສ່ວນໃຫ່ຍແມ່ນຢູ່ໃນໄລຍະເດືອນ 8 - 9 , ໄລຍະເວລາຂອງນ້ຳຖ້ວມແມ່ນ 10 - 20 ວັນ

### 3.2. ປະລິມານ/ ຄວາມຮຸນແຮງແລະເນື້ອທີ່ຖືກຖ້ວມ

- ປະລິມານ ແລະ ຄວາມຮຸນແຮງຂອງໄພນ້ຳຖ້ວມ ສ່ວນຫຼາຍ ແມ່ນຂອບເຂດທີ່ຖືກນ້ຳຖ້ວມ ເປັນຕົ້ນແມ່ນ ຊັບສິນສ່ວນລວມ ແລະ ຊັບສິນຂອງບຸກຄົນ ເຊັ່ນ : ເຮືອນຊານບ້ານຊ່ອງ,ໄຮ່ນາ,ຮົ້ວສວນ, ສັດລ້ຽງ ແລະ ອື່ນ ໆ ແລະ ສັບສິນສາລະນະປະໂຫຍດຕ່າງໆ ( ໂຮງຮຽນ, ສຸກສາລາປະຈຳບ້ານ, ຊົນລະປະທານ, ວັດວາອາລາມ, ເສັ້ນທາງຄົມມະນາຄົມເປັນຕົ້ນ. ເຊິ່ງຜົນກະທົບດັ່ງກ່າວ ໃນຮອບ 8 ປີ ( 2000 ຫາ 2008 ) ພໍສັງລວມໃນແຕ່ລະດ້ານດັ່ງຕາຕະລາງລຸ່ມນີ້.

### ກ. ຜົນກະທົບທາງດ້ານສັງຄົມ-ການປົກຄອງ

| ລ/ດ | ລາຍການ | ປີ2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|---|---|---|
| 1 | ຈ/ນບ້ານທີ່ຖືກກະທົບ | 155 | 147 | 91 | 65 | 96 | 126 | 120 | 70 | 135 |
| 2 | ຈ/ນຫຼັງຄາ ທີ່ຖືກກະທົບ | 2.512 | 709 | 6.115 | 5.002 | 8.300 | 8.540 | 8.212 | 5.830 | 7.052 |
| 3 | ຈ/ນຄອບຄົວທີ່ຖືກກະທົບ | 2.717 | 737 | 6.207 | 5.420 | 8.336 | 8.571 | 8.300 | 5.891 | 7.129 |
| 4 | ຈ/ນປະຊາຊົນທີ່ຖືກກະທົບ | 15.039 | 6.816 | 31.171 | 28.400 | 41.293 | 49.497 | 47.920 | 43.500 | 38.822 |

## ຂ. ຜົນກະທົບທາງດ້ານກະສິກຳ

- ## ຜົນກະທົບຕໍ່ການຜະລິດເຂົ້ານາປີ

| ລ/ດ | ລາຍການ | ປີ2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|---|---|---|
| 1 | ເນື້ອທີ່ນາລວມ ( Ha) | 7.567 | 8.560 | 10.634 | 10.634 | 10.634 | 10.634 | 10.634 | 10.634 | 0.634 |
| 2 | ເນື້ອທີ່ນາທີ່ຖືກນຖ້ວມ(Ha) | | | 4.709 | | 4.655 | 4.752 | | | |
| 3 | ເນື້ອທີ່ນາເສຍຫາຍຈາກນ້ຳຖ້ວມ | | | 3.322 | | 3.581 | 3.671 | | | |
| 4 | ຜົນເສຍຫາຍລວມ ( Ton ) | | | 9.633 | | 10.563 | 10.753 | | | |
| 5 | ມູນຄ່າເສຍຫາຍ ( x ລ້ານກີບ ) | | | 14.450 | | 15.845. | 16.069. | | | 12.095 |

* ຜົນກະທົບຕໍ່ລະບົບຊົນລະປະທານ

| ລ/ດ | ລາຍການ | ປີ2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|---|---|---|
| 1 | ມູນຄ່າເສຍຫາຍ ( x ລ້ານກີບ ) | 24. | 50 | 20 | 15 | 10 | 20 | 35 | 30 | 20 |

* ຜົນກະທົບຕໍ່ການລ້ຽງສັດ ( ລ້ຽງສັດແລະການປະມົງ )

| ລ/ດ | ລາຍການ | ປີ2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 |
|---|---|---|---|---|---|---|---|---|---|---|
| 1 | ມູນຄ່າເສຍຫາຍ ( x ລ້ານກີບ ) | 4.11 | 55 | 410 | 68 | 401 | 207 | 101 | 68 | 345 |

## ຄ. ຜົນກະທົບທາງດ້ານໂຄງລ້າງພື້ນຖານຄົມມະນາຄົມ

## ( ມູນຄ່າເສຍຫາຍຂອງທົນທາງ, ຂົວແລະທໍ່ຕ່າງໆ ຫົວໜ່ວຍX ກີບ )

| ລ/ດ | ລາຍການ | ປີ2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 | ລວມ |
|---|---|---|---|---|---|---|---|---|---|---|---|
| 1 | ຫົນທາງແຂວງ ( No 13 ໃຕ້ ) | 635 | 518 | 741 | 696 | 844 | 1,483 | 98 | 153 | 124 | |
| 2 | ຫົນທາງເມືອງ | 48 | 12 | 32 | 18 | 51 | 66 | 58 | 64 | 37 | |
| 3 | ຫົນທາງເທດສະບານ | 00 | 00 | 00 | 00 | 00 | 00 | 00 | 00 | 00 | |
| 4 | ທາງດິນແດງ | 358 | 409 | 195 | 297 | 240 | 844 | 324 | 258 | 398 | |
| 5 | ທາງຊຸມຊົນ | 00 | 00 | 00 | 00 | 00 | 00 | 00 | 00 | 00 | |
| 6 | ລວມ | 1,041 | 939 | 1163 | 1,011 | 1,135 | 2,393 | 480 | 475 | 559 | 9,196 |

## ງ. ຜົນກະທົບທາງດ້ານວັດທະນາທຳ

## ( ມູນຄ່າເສຍຂອງໂຮງຮຽນ-ໂຮງໝໍ ຫົວໜ່ວຍ x ລ້ານ ກີບ )

| ລ/ດ | ລາຍການ | ປີ2000 | 2001 | 2002 | 2003 | 2004 | 2005 | 2006 | 2007 | 2008 | ລວມ |
|---|---|---|---|---|---|---|---|---|---|---|---|
| 1 | ດ້ານການສຶກສາ(ໂຮງຮຽນ ) | 10.420 | 10.920 | 10.000 | 10.000 | 12.100 | 15.300 | 12.41 | 11.00 | 10.00 | 92.15 |
| 2 | ດ້ານສາທາລະນະສຸກ | 3.000 | 3.500 | 2.700 | 2.700 | 3.500 | 3.800 | 2.700 | 2.400 | 2.700 | 27.000 |
| 3 | ລວມ | 13.42 | 14.42 | 12.700 | 12.700 | 15.600 | 19.100 | 15.110 | 13.400 | 12.700 | 119.150 |

ໝາຍເຫດ: ນອກຈາກມີການກະທົບ ແລະ ສິ່ງຜົນເສຍຫາຍເປັນຈຳນວນຫຼວງຫຼາຍຕໍ່ຂົງເຂດການສຶກສາ,ສາທາ ລະນະສຸກ ແລ້ວ ຍັງມີຜົນກະທົບເຖິງສິ່ງສາທາລະນະອື່ນໆອີກ ກະທົບໃສ່ວັດວາອາຮາມ ເຊິ່ງ ໃນປີ 2005 2 ແຫ່ງ ມີມູນຄ່າ 7.500.000 ກີບ.

## 3.3. ສັງລວມມູນຄ່າເສຍຫາຍຈາກຜົນກະທົບໃນແຕ່ລະຂົງເຂດ

- ໃນໄລຍະ8 ປີຜ່ານມາ ( 2000-2008) ຜົນເສຍຫາຍຈາກຜົນກະທົບຂອງໄພນ້ຳຖ້ວມມີ

ມູນຄ່າລວມທັງໝົດ = 11.313.516.125 ກີບ

ໃນນັ້ນລວມມີດ້ານຕ່າງໆຄື:

ກ. ດ້ານການກະສິກຳ = 2.025.366.125 ກີບ

- ການປູກຝັງ(ນາປີ) = 46.366.125 ກີບ
- ຊີນລະປະທານ = 224.000.000 ກີບ
- ການລ້ຽງສັດ = 1.755.000.000 ກີບ

ຂ. ດ້ານພື້ນຖານໂຄງລ່າງ ຄົມມະນາຄົມ = 9,196,000,000 ກີບ

ຄ. ດ້ານວັດທະນະທຳສັງຄົມ = 92.150.000 ກີບ

- ການສຶກສາ = 92.150.000 ກີບ
- ສາທາລະນະສຸກ = 27.000.000 ກີບ
- ວັດວາອາລາມ = 7.500.000 ກີບ

## 4 ຂົງເຂດຕ່າງທີ່ມີຄວາມສ່ຽງຕໍ່ໄພນ້ຳຖ້ວມ

4.1 ຂົງເຂດສັງຄົມ ແລະ ການປົກຄອງ

- ບັນດາບ້ານ, ເຮືອນຊານ ແລະ ປະຊາຊົນທີ່ຢູ່ໃນເຂດທີ່ມີສ່ຽງຕໍ່ການເກີດໄພພິບັດນ້ຳຖ້ວມຄືດັ່ງທີ່ສະແດງໃຫ້ເຫັນຢູ່ໃນຕາຕະລາງຂ້າງເທິງນັ້ນ ; ແຕ່ລະບ້ານທີ່ເປັນຈຸດຫລໍ່ແຫລມ ແລະ ມີ ຄວາມສ່ຽງໄດ້ຈັດລຽງດັ່ງຕາຕະລາງລຸ່ມນີ້:

**ກ. ບ້ານທີ່ມີຄວາມສ່ຽງປະເພດ (1 ).**

| ລ/ດ | ຊື່ບ້ານ | ຈຳນວນຫຼັງຄາ | ຈຳນວນຄອບຄົວ | ຈຳນວນພົນລະເມືອງ | |
|---|---|---|---|---|---|
| | | | | ລວມ | ຍິງ |
| 1 | ວັງດາວ | 38 | 35 | 207 | 108 |
| 2 | ແຄນ | 45 | 54 | 244 | 115 |
| 3 | ນາຄົກ | 111 | 124 | 632 | 315 |
| 4 | ຜາຮ່າງເໜືອ | 79 | 88 | 460 | 222 |
| 5 | ທ່ານາເໜືອ | 167 | 178 | 1.010 | 513 |
| 6 | ຜາຈີວ | 18 | 18 | 118 | 54 |
| 7 | ຊາງ | 45 | 47 | 283 | 148 |
| 8 | ສອງຄອນ | 47 | 53 | 283 | 148 |
| 9 | ປາກທົກ | 32 | 40 | 210 | 99 |
| 10 | ປາກແຫວ່ງ | 50 | 49 | 281 | 141 |
| 11 | ວັງຫົວປາ | 70 | 72 | 414 | 217 |
| 12 | ໂພນເໝັ້ນ | 89 | 87 | 514 | 263 |

| | | | | | |
|---|---|---|---|---|---|
| 13 | ຫີນຄັນ | 36 | 38 | 176 | 88 |
| 14 | ດອນ | 51 | 55 | 342 | 176 |
| 15 | ໜອງບົວນ້ອຍ | 36 | 44 | 212 | 110 |
| 16 | ນາສະກອງ | 23 | 24 | 130 | 68 |

ຂ. ບ້ານທີ່ມີຄວາມສ່ຽງປະເພດ ( 2 )

| ລ/ດ | ຊື່ບ້ານ | ຈຳນວນຫຼັງຄາ | ຈຳນວນຄອບຄົວ | ຈຳນວນພົນລະເມືອງ | |
|---|---|---|---|---|---|
| | | | | ລວມ | ຍິງ |
| 1 | ນາຂາມ | 315 | 338 | 1.977 | 984 |
| 2 | ນາພວກ | 192 | 221 | 1.105 | 539 |
| 3 | ໜອງຮາງ | 84 | 77 | 477 | 254 |
| 4 | ຜາໂກນໂກ | 37 | 36 | 225 | 116 |
| 5 | ແກ້ງຄຶດ | 46 | 54 | 288 | 141 |
| 6 | ທົ່ງລົມ | 69 | 71 | 426 | 237 |
| 7 | ວັງມົນ | 62 | 71 | 346 | 176 |
| 8 | ນາໂພ | 213 | 242 | 1.307 | 622 |
| 9 | ບົງ | 131 | 150 | 737 | 376 |
| 10 | ນາທານ | 31 | 36 | 199 | 92 |
| 11 | ນາໂນ | 49 | 54 | 288 | 149 |
| 12 | ໜອງຊຸ່ມ | 39 | 39 | 228 | 116 |
| 13 | ໜອງຈັງ | 86 | 59 | 343 | 162 |
| 14 | ນາເຕີຍ | 26 | 30 | 145 | 77 |
| 15 | ຫາດໃຫ່ຍ | 77 | 84 | 416 | 213 |
| 16 | ແກ້ງພັກຄຳ | 58 | 56 | 313 | 177 |
| 17 | ສອງຫ້ອງ | 414 | 384 | 2.162 | 1.109 |
| 18 | ໂພນມ່ວງ | 56 | 59 | 324 | 164 |
| 19 | ບ້ານພິງ | 305 | 317 | 1.539 | 770 |
| 20 | ປຸ່ງເໜືອ | 264 | 312 | 1.296 | 688 |
| 21 | ຫາດນາງກ້ອມ | 67 | 70 | 368 | 175 |
| 22 | ຫີນບູນເໜືອ | 96 | 106 | 506 | 250 |
| 23 | ຫີນບູນໃຕ້ | 223 | 236 | 1.192 | 598 |

-ການກຳນົດຈຸດຫລົບໄພຂອງບັນດາບ້ານທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ທາງເມືອງຈະກຳນົດເອົາ 4 ບູລະມະສິດຄື :ບັນດາບ້ານທີ່ນອນຢູ່ໃນໂຄງການຊ່ວຍເຫຼືອແຜນການຍັບຍ້າຍຈັດສັນຂອງເທີນ, ບ້ານບໍ່ນອນໃນໂຄງການຍັບຍ້າຍແຕ່ຂໍການຍັບຍ້າຍ ແລະບັນດາບ້ານທີ່ເມືອ ງກຳນົດເປັນຈຸດຫລົບໄພຊົ່ວຄາວຄື :

### ກ. ບູລະມະສິດທີ່ (1 )

1 ຈຸດພູໜາກແໜ່ງ ມີ 5 ບ້ານ : ບ້ານ ດອນ,ຝາໂກນໂກ,ນາງສະກອງ,ແກ້ງຄິດ ແລະ ບ້ານແຄນ.
2. ຈຸດພູຊາດ 5 ບ້ານ : ບ້ານດອນ,ວັງດາວ,ນາພອກ,ກົງພັດ ແລະ ຫາດຊາຍຄ້າງ.
3. ຈຸດຕີນພູຜາຂວາກ ມີ3 ບ້ານ : ບ້ານ ນາຄົກ, ທົ່ງລົມ, ຝັ່ງແດງ.
4. ຈຸດປາຊ້າງ ມີ 3 ບ້ານ : ບ້ານຜາຫ້າງເໜືອ, ທ່ານາໃຕ້ ແລະ ຜາຈິວ.
5. ຈຸດຫ້ວຍເດື່ອມີ 2 ບ້ານ : ບ້ານຊາງ ແລະ ວັງມົນ.
6. ຈຸດພູຫ້ວຍລັດ ມີ 2 ບ້ານ : ບ້ານ ສອງຄອນ ແລະ ປາກທົກ.
7. ຈຸດພູຂີ້ເຫຼັກ ມີ 1 ບ້ານ : ບ້ານປາກແຫວ່ງ.

### ຂ. ບູລະມະສິດທີ່ (2 )

1. ຈຸດທົ່ງນາຈານ( ແຄມທາງກອງລໍ ) ມີ 3 ບ້ານ : ຜາຄ້ອງ, ໜອງຮາງ ແລະ ໂພນທອງ.
2. ຈຸດປາກທາງບ້ານທ່າ( ແຄມທາງກອງລໍ ) ມີ 1 ບ້ານ : ບ້ານ ກາງ ( ບ້ານ ທ່າ ).
3. ຈຸດຝັ່ງບ້ານຄູນຄຳ ມີ 1 ບ້ານ : ບ້ານຖ້ຳແຕ້ມ.

ຄ ຈຸດທີ່ບໍ່ນອນໃນການຍັບຍ້າຍຈັດສັນຂອງໂຄງການແຕ່ຂໍຍັບຍ້າຍ ມີ 2 ຈຸດ :

1. ຈຸດໜອງຜີ ມີ 1 ບ້ານ : ບ້ານນາຄຳ.
2. ຈຸດໜອງເຜີ້ງ ມີ 1 ບ້ານ : ບ້ານນາຊ້າງຂ້າມ.

### ງ.ບັນດາບ້ານທີ່ບໍ່ນອນຢູ່ໃນແຜນຊ່ວຍເຫຼືອຈາກເທີນຫີນບູນ,ແຕ່ເມືອງໄດ້ກຳນົດເປັນຈຸດຫລົບ ໄພຈາກໄພນ້ຳຖ້ວມຊົ່ວຄາວ.

1. ຈຸດໂພນເໝັ້ນ ມີ 5 ບ້ານ: ບ້ານໂພນເໝັ້ນ, ຫີນຄັນ,ນາເຕີຍ,ໜອງຈັງ, ໜອງຊຸ້ນ.
2. ຈຸດນາທານ ມີ 4 ບ້ານ : ນາບົງ, ນາທານ, ນາໂພ, ນາຫ້າງ.
3. ຈຸດວັງຫົວປາ ມີ 2 ບ້ານ : ວັງຫົວປາ , ແກ້ງພັກຄຳ.
4. ຈຸດຄຳແກ້ວ ມີ 3 ບ້ານ : ສາມັກຄີໄຊ, ຄຳແກ້ວ, ສອງຫ້ອງ.
5. ຈຸດຫີນບູນໃຕ້ ມີ 4 ບ້ານ: ຫີນບູນໃຕ້,ຫີນບູນເໜືອ,ໂພນມ່ວງ ແລະ ຫາດນາກ້ອມ.
6. ຈຸດບ້ານຫາດມີ 4 ບ້ານ : ບ້ານຫາດ, ປຸງເໜືອ , ບ້ານແມງ ແລະ ບ້ານພິງ.

### 4.1.1 ຂົງເຂດກະສິກຳ

- ເນື້ອທີ່ນາຈຳນວນ 10.634 ເຮັກຕາ ແລະເນື້ອທີ່ສວນ 1.360 ເຮັກຕາ ຈະຖືກນ້ຳຖ້ວມ ແລະ ມີຜົນເສຍຫາຍເປັນຈຳນວນຫຼວງຫຼາຍ, ເໝືອນດັ່ງປີ 2005 ເນື້ອທີ່ນາຖືກເສຍຫາຍ 45 %
- ສັດລ້ຽງຈຳນວນຫຼວງຫຼາຍກໍ່ຖືກຜົນກະທົບເຊັ່ນ: ງົວ,ຄວາຍ ແລະ ສັດປີກຈຳນວນໜຶ່ງ
- ໜອງປາຂອງປະຊາຊົນຈຳນວນ 136 ໜອງຈະຖືກນ້ຳຖ້ວມ ແລະ ສ້າງຄວາມເສຍຫາຍເປັນຈຳນວນຫຼາຍ

## ຂົງເຂດໂຄງລ່າງພື້ນຖານ ຄົມມະນາຄົມ

- ຖະໜົນຫົນທາງຈຳນວນ . . .48 .. . ເສັ້ນ ກໍຈະຖືກເສາະເຈື່ອນ ເພພັງ,ຂົວ,ທໍ່ລອດທາງກໍຈະຖືກກະທົບເໜືອນກັນ

## 4.1.2 ຂົງເຂດວັດທະນະທຳສັງຄົມ

- ໂຮງຮຽນ, ສຸກສາລາ,ວັດວາອາຮາມກໍຖືກກະທົບ ແລະ ມີຜົນເສຍຫາຍເປັນຈຳນວນຫຼາຍ.

## *IV ຄວາມອາດສາມາດ ແລະ ແຫລ່ງວັດຖຸ*

**1 ບັນຊີວັດຖຸອຸປະກອນຮັບໃຊ້ສຳລັບຮອງຮັບການຍົກຍ້າຍຄົວເຮືອນ**

| ລ/ດ | ລາຍການວັດຖຸອຸປະກອນ | ຫົວໜ່ວຍ | ຈຳນວນ | | |
|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ |
| 1 | ເຕັ້ນ | ຊຸດ | 40 | 00 | 40 |
| 2 | ເຄື່ອງຄົວ(ໝໍ້..ຖວ້ຍຊາມ.) | ຊຸດ | 100 | 00 | 100 |
| 3 | ຈັກໄຟຟ້າ & ນ້ຳມັນ | ຊຸດ | 8 | 00 | 8 |
| 4 | ສະບຽງອາຫານ | ຊຸດ | 130 | 00 | 130 |

**2 ບັນຊີພາຫານະການຂົນສົ່ງ**

| ລ/ດ | ລາຍການພາຫານະ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຮືອໄມ້ ແລະ ເຄື່ອງຈັກ | ລຳ | 00 | 2,055 | 00 | |
| 2 | :ຮືອທ້ອງແບນ ແລະເຄື່ອງຈັກ | ລຳ | 16 | 00 | 16 | |
| 3 | ລົດບັນທຸກ | ຄັນ | - | 23 | - | ລົດເອກະຊົນ |
| 4 | ລົດໂດຍສານ | ຄັນ | - | 68 | - | ລົດເອກະຊົນ |
| 5 | ລົດໄຖນາ | ຄັນ | - | 3,000 | - | ລົດປະຊາຊົນ |
| 6 | ລົດກະບະ | ຄັນ | 7 | 6 | 1 | ລົດເມືອງ 4 ຄັນ |
| 7 | ເຄື່ອງອຸປະກອນຊູຊີບຄົບຊຸດ | ຊຸດ | 20 | 0 | 20 | ເສື້ອ, ເຊື້ອກ.... |

### 3. ບັນຊີອຸປະກອນສື່ສານ

| ລ/ດ | ລາຍການລະບົບສື່ສານ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | Telephone/Fax | ເຄື່ອງ | 1 | 00 | 1 | |
| 2 | ໂທລະສັບຜ່ານດາວທຽມ/ມືຖື | ເຄື່ອງ | 22 | | 22 | Net-covered |
| 3 | ວິທະຍຸຕິດຕໍ່ໄລຍະໄກ້ | ເຄື່ອງ | 22 | 00 | 22 | |
| 4 | ໂທລະໂຄ່ງ | ຊຸດ | 8 | 00 | 8 | ແບບເຄື່ອນທີ່ |
| 5 | COMPUTTER (ນົດບຸກ ) | ເຄື່ອງ | 2 | | 2 | |
| 6 | PINTER | ໜ່ວຍ | 2 | | 2 | |
| 7 | USB | ອັນ | 2 | | 2 | |

### 4. ບັນຊີອຸປະກອນຄວບຄຸມນ້ຳຖ້ວມ

| ລ/ດ | ລາຍການອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ເຄື່ອງໝາຍວັດແທກນ້ຳຖ້ວມ | ຈຸດ | 8 | 00 | 8 | |

### 5. ບັນຊີສິ່ງອຳນວຍຄວາມສະດວກທາງການແພດ.

| ລ/ດ | ລາຍການສິ່ງອຳນວຍ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ສຸກສາລາ | ແຫ່ງ | 5 | 15 | 5 | |
| 2 | ທ່ານໝໍ/ຊ່ຽວຊານ | ຄົນ | 10 | 4 | 10 | |
| 3 | ລົດໂຮງໝໍ | ຄັນ | 01 | 00 | 01 | |
| 4 | ອຸປະກອນການແພດ | x ລ້ານກີບ | 100 | 00 | 100 | |
| 5 | ຢາປົວພະຍາດ | x ລ້ານກີບ | 150 | 00 | 150 | |
| 6 | ທີມແພດເຄື່ອນທີ | ທີມ | 8 | 00 | 8 | |
| 7 | ອະສາມະໝັກກາແດງ | ກອງ | 02 | 00 | 02 | |
| 8 | ອະສາມະໝັກ ອ.ສ. ບ | ກອງ | 16 | 00 | 16 | |

### 6. ບັນຊີຊັບພະຍາກອນມະນຸດ

| ລ/ດ | ລາຍການຊັບພະຍາກອນມະນຸດ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ຂໍເພີ້ມ | |
| 1 | ທີມປ້ອງກັນ-ຕ້ານນ້ຳຖ້ວມ | ທີມ | 08 | 00 | 08 | |
| 2 | ທີມກູ້ໄພ ແລະ ເຄື່ອນຍ້າຍ | ທີມ | 08 | 00 | 08 | |
| 3 | ກຳລັງທະຫານ-ຕຳຫລວດ | ກອງຮ້ອຍ | 02 | 01 | 02 | |

| | | | | | | |
|---|---|---|---|---|---|---|
| 4 | ທີມແພດເຄື່ອນທີ່ | ທີມ | 08 | 00 | 08 | |
| 5 | ອາສາສະມັກກາແດງ | ກອງ | 02 | 00 | 02 | |
| 6 | ອາສາສະມັກ | ກອງ | 16 | 00 | 16 | |

## V ດ້ານການຈັດຕັ້ງສໍາລັບວຽກງານຄຸ້ມຄອງໄພພິບັດ

### 1 ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ (DDMC)

- ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ ໄດ້ຖືກຈັດຕັ້ງຂຶ້ນໂດຍການຕົກລົງຂອງເຫັນດີເປັນເອະພາບ ຂອງການນໍາຂັ້ນເມືອງ ຈຶ່ງອອກຂໍ້ຕົກລົງຂອງເຈົ້າເມືອງເມືອງກົມບູນ, ໃນຂໍ້ຕົກລົງສະບັບເລກທີ 203 /ຈມ.ໜບ, ລົງວັນທີ 03 / 4 / 2007, ລາຍຊື່ຂອງຄະກໍາມະການ ແລະ ຄະນະກອງເລຂາ ມີລາຍລະອຽດຕໍ່ໄປນີ້:

### ກ. ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ.

1. ທ່ານ ຄໍາເພົາ ດວງພິໃສ ຮອງເຈົ້າເມືອງໆ ຫີນບູນ ເປັນປະທານ
2. ທ່ານ ບຸນນາກ ໄຊຍະວົງ ຫົວໜ້າຫ້ອງການແຮງງານສະຫວັດດີການເມືອງເປັນຮອງປະທານ.
3. ທ່ານ ຄໍາຜຸຍ ທອນພັກດີ ຫົວໜ້າ ຫ້ອງການແຜນການ - ການລົງທຶນເປັນ ກໍາມະການ
4. ທ່ານ ນ.ສີພັນ ເພັດອຸດົມ ປະທານສະຫະພັນແມ່ຍິງເມືອງ ເປັນ ກໍາມະການ
5. ທ່ານ ຖາວອນ ແກ້ວຄໍາພັນ ຫົວໜ້າຫ້ອງການໂຄສະນາອົບຮົມເມືອງ ເປັນຮອງປະທານ.
6. ທ່ານ ໂຮມມາ ສີບຸນເຮືອງ ຮອງຫົວໜ້າຫ້ອງການສົ່ງເສີມກະສິກໍາ ເປັນກໍາມະການ.
7. ທ່ານ ຍິນຄໍາ ປາມະນີວົງ ວ່າການຫົວໜ້າຫ້ອງການສຶກສາປະຈໍາເມືອງເປັນ ກໍາມະການ.
8. ທ່ານ ດຣ ລັດສະໜີ ລິມບູນຂັນ ຮອງຫົວໜ້າຫ້ອງການສາທາລະນະສຸກເມືອງເປັນ ກໍາມະການ.
9. ທ່ານ ຄູນຄໍາ ຈອນບຸນຕາ ຮອງຫົວໜ້າກອງບັນຊາການ ປກສ ເມືອງ ເປັນ ກໍາມະການ.
10. ທ່ານ ບຸນເລີງ ບຸດສະດີ ຫົວໜ້າຫ້ອງການ ໂຍທາທິການເມືອງ ເປັນ ກໍາມະການ.
11. ທ່ານ ເພັດວິສັກ ອິນນຸລາ ຮອງ ຫົວໜ້າຫ້ອງການ - ການເງິນເມືອງ ເປັນ ກໍາມະການ.
12 ທ່ານ ແສງສຸລິສັກ ພົາສຸວັນ ຮອງຫົວໜ້າຫ້ອງວ່າການເມືອງ ເປັນ ກໍາມະການ.
13. ທ່ານ ພອນແສງ ກົມສີຫາວົງ ວ່າການເລຂາຊາວໜຸ່ມເມືອງ ເປັນ ກໍາມະການ.

### ຂ . ຄະນະກອງເລຂາ.

1. ທ່ານ ອ່ອນຈັນ ໄຊສັກດາ ຮອງຫົວໜ້າຫ້ອງວ່າການປົກຄອງເມືອງ ເປັນຫົວໜ້າ
2. ທ່ານ ສົນວນມາ ອິນທິລາດ ວິຊາການຫ້ອງການສົ່ງເສີມກະສິກໍາ ເປັນຮອງ.
3. ທ່ານ ພອນຄໍາ ກັດຕິ ຍະລາດ ວິຊາການຫ້ອງການສຶກສາເມືອງ ເປັນກໍາມະການ
4. ທ່ານ ຄານ ຫຼວງເຮືອງ ວິຊາການ ກອງບັນຊາການ ປກສເມືອງ ເປັນກໍາມະການ
5. ທ່ານ ຄໍາຜັນ ພິມມະພາ ຮອງຫົວໜ້າຫ້ອງການຖະແຫຼງຂ່າວ-ວັດທະນະທໍາ ເປັນກໍາມະການ
6. ທ່ານ ໂພໄຊ ກັດຕິຍະລາດ ວິຊາການຫ້ອງການໂຍທາເມືອງ ເປັນກໍາມະການ
7. ທ່ານ ວັນນະທົງ ທໍາມະວົງ ວິຊາການ ຫ້ອງການແຜນການເມືອງ ເປັນກໍາມະການ
8 ທ່ານ ນິຄົມ ສຸຂະມຸນຕີ ຮອງຫົວໜ້າໜ່ວຍງານຄົ້ນຄ້ວາ - ສັງລວມ ເປັນກໍາມະການ
9. ທ່ານ ນ. ມະນີ ພິມມະດີ ວິຊາການ ຫ້ອງການແຮງງານສະຫວັດດີການ ເປັນກໍາມະການ

10. ທ່ານ ນ. ກິດສະໜາ ວັນນະລາດ ຫ້ອງວ່າການປົກຄອງເມືອງ ເປັນກຳມະການ
11. ທ່ານ ນ. ລຳພູນ ລາດສຸວັນ ຫ້ອງວ່າການປົກຄອງເມືອງ ເປັນກຳມະການ
12. ທ່ານ ນ .ປາດຖະໜາ ສຸດທິພົງ ຫ້ອງການແນວລາວສ້າງຊາດເມືອງ ເປັນກຳມະການ

## *1.1 ພາລະບົດບາດຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ (DDMC)*

### ກ. ພາລະບົດບາດຂອງທ່ານເຈົ້າເມືອງ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ຮຽກເຊີນເປີດກອງປະຊຸມຄະນະປະຈຳພັກເມືອງ<br>- ເປີດກອງປະຊຸມຮ່ວມກັບຄະນະກຳມະການຕ້ານໄພພິບັດຂັ້ນເມືອງ. | - ລົງຕິດຕາມແລະໃຫ້ຄວາມອົບອຸ່ນໃນຂັ້ນທ້ອງຖິ່ນທີ່ຖືກກະທົບໄພພິບັດ.<br>- ສະເໜີຂໍທຶດຊຸ້ນນຳຈາກຂັ້ນເທິງ | - ແນະນຳໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງລົງເກັບຂໍ້ມູນຜົນເສຍຫາຍຈາກໄພພິບັດໃນແຕ່ລະດ້ານ |

### ຂ. ພາລະບົດບາດຂອງທ່ານຮອງເຈົ້າເມືອງແລະປະທານຄຸ້ມຄອງໄພພິບັດ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| .- ຮຽກຄະນະກຳມະການແລະກອງເລຂາປະຊຸມວາງແຜນກະກຽມສ້າງແຜນຊອກຫາແຫ່ງທຶນຊ່ວຍເຫຼືອ.<br>- ແຕ່ງຕັ້ງແລະແບ່ງຄວາມຮັບຜິດຊອບໃຫ້ແກ່ຄະນະກຳມະການລົງປະຕິບັດຕົວຈິງ. | -ສັ່ງການປະຕິບັດຕົວຈິງຕາມພາລະບົດບາດ | - ລົງຕິດຕາມແລະປະຕິບັດຕາມແຜນທີ່ວາງໄວ້ເພື່ອຟື້ນຟູ ປົວແປງສະຖານທີ່ເສຍຫາຍ ຈາກໄພພິບັດ |

### ຄ ພາລະບົດບາດລວມຂອງຄະນະກຳມະການຂັ້ນເມືອງ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ກຳນົດແຜນງານ, ໂຄງການດຳເນີນງານສຳລັບປ້ອງກັນ, ຕອບໂຕ້ ແລະ ຟື້ນຟູທົດແທນຜົນກະທົບ,<br>- ຈັດຕັ້ງກອງປະຊຸມສາມັນ ປະ ຈຳປີເພື່ອຕີລາຄາຄືນຜົນການເຄື່ອນໄຫວໃນປີຜ່ານມາແລະ ຜ່ານແຜນປະຈຳປີ.<br>-ມອບໝາຍຄວາມຮັບຜິດຊອບໃຫ້ຄະນະກຳມະການແຕ່ລະພາກສວ່ນ ແຕ່ລະຂະແໜງການ<br>- ຕິດຕາມ ແລະ ແນະນຳໃນການສ້າງແຜນຕອບໂຕ້ໄພພິບັດທີ່ຈາກເກດີຂຶ້ນ. | - ລົງຕິດຕາມ ກວດກາ ແລະ ຊຸກຍູ້ຄະນະກຳມະການ ແລະ ທີມງານທີ່ປະຕິບັດແຜນງານ ກິດຈະກຳຢູ່ພາກສະໜາມ.<br>- ລົງຕິດຕາມບ້ານທີ່ຖືກກະທົບ ຫລືຈຸດຫລົບໄພ ເພື່ອປຸກລະດົມແນວຄິດຈິດໃຈປະຊາຊົນຜູ້ຖືກກະທົບ.<br>- ລາຍງານຂັ້ນເທິງແຕ່ລະຂັ້ນ, ອີງຕາມສະພາບການໃນແຕ່ລະໄລຍະ.<br>- ປະສານງານກັບທຸກພາກສ່ວນເພື່ອໃຫ້ການຊ່ວຍເຫຼືອບ່ອນທີ່ມີຜົນກະທົບ | - ເປັນເສຍນາທິການໃຫ້ແກຂັ້ນເທິງໃນການເກັບກຳຜົນເສຍຫາຍຈາກຜົນກະທົບ ແລະ ຊ່ວຍເຫຼືອຜູ້ທີ່ຖືກຜົນກະທົບ.<br>-ລົງຕິດຕາມ ກວດກາ ແລະ ປະເມີນຜົນກະທົບຈາກ ໄພນ້ຳ ຖວ້ມ.<br>- ລົງຕິດຕາມບ້ານທີ່ຖືກກະທົບເພື່ອໃຫ້ການຟື້ນຟູ, ທົດແທນຜົນກະທົບ. ແລະ ຟື້ນຟູແນວຄິດຈິດໃຈຂອງພໍ່ແມ່ປະຊາຊົນຜູ້ຖືກກະທົບ.<br>- ຈັດກອງປະຊຸມ ສະຫລຸບຕີລາຄາຜົນການເຄື່ອນໄຫວ ຂອງຄະນະກຳ |

| | | |
|---|---|---|
| | - ຈັດຕັ້ງຈຸດປະສານງານ | ມະການ ແລະ ທີມ ງານ.<br>- ລາຍງານຜົນກະທົບຈາກໄພນ້ຳຖ້ວມໃຫ້ແກ່ຂັ້ນເທິງຂອງຕົນ. |

**໑. ພາລະບົດບາດລວມຂອງຄະນະກອງເລຂາ**

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ສັງລວມຂໍ້ມູນຜົນກະທົບນ້ຳຖ້ວມຂອງປີຜ່ານມາ, ວິເຄາະວິໃຈ ແລະ ຮ່າງບັນດານິຕິກຳຕ່າງໆໃຫ້ແກ່ຄະນະກຳມະການ (ບົດສະຫລຸບ, ແຜນການ, ຄຳສັ່ງຂໍ້ກຳນົດກົດລະບຽບຕ່າງໆຂອງ<br>ເຈົ້າເມືອງ, ).<br>- ກະກຽມປັດໃຈຈຳເປັນສຳລັບ\ ການ<br>ຈັດຕັ້ງກອງປະຊຸມສາມັນປະຈຳປີຂອງ<br>ຄະນະກຳມະການ, ປະສານງານ ລະ<br>ຫວ່າງຫ້ອງການຕ່າງໆພາຍໃນເມືອງ | -ຮ່ວມລົງຕິດຕາມ ກວດກາ ແລະ ຊຸກຍູ້ ກັບຄະນະກຳມະການ ແລະ ເກັບກຳສະພາບຜົນກະທົບ , ເຝົ້າລະ<br>ວັງໄພ ນ້ຳຖ້ວມຢ່າງໃກ້ສິດ ແລະ ແນະນຳວິທີການຕອບໂຕ້ໃຫ້ທັນການ.<br>- ຮ່ວມກັບຄະນະກຳມະການລົງຕິດຕາມບ້ານທີ່ຖືກກະທົບ ຫລື ຈຸດ<br>ຫລົບໄພ ເພື່ອໃຫ້ການຊ່ວຍເຫລືອຕາມຄວາມເໝາະສົມ.<br>- ສ້າງບົດລາຍງານໃຫ້ຄະນະກຳມະ ການ ແລະ ລາຍງານຂັ້ນເທິງຂອງຕົນແຕ່ລະຂັ້ນ, ອີງຕາມສະພາບການໃນແຕ່ລະໄລຍະ. | - ຮ່ວມກັບຄະນະກຳມະການລົງຕິດ ຕາມ ກວດກາ ແລະ ປະເມີນຜົນກະ<br>ທົບຈາກໄພນ້ຳຖ້ວມ.ສ້າງຮ່າງບົດປະ<br>ເມີນຜົນກະທົບ, ບົດສະຫລຸບຜົນການເຄື່ອນໄຫວ, ແຜນ ການຟື້ນຟູທົດແທນ ແລະ ແຜນການເຄື່ອນໄຫວໃນປີຕໍ່ໄປ.<br>- ຮ່ວມກັບຄະນະກຳມະການລົງຕິດຕາມບ້ານທີ່ຖືກກະທົບເພື່ອໃຫ້<br>ການຟື້ນຟູ, ທົດແທນຜົນກະທົບ ແລະ<br>ຟື້ນຟູແນວຄິດຈິດໃຈຂອງປະຊາຊົນ<br>ຜູ້ຖືກກະທົບ.<br>- ກະກຽມກອງປະຊຸມສະຫລຸບຕີລາ<br>ຄາຜົນການເຄື່ອນໄຫວຂອງຄະນະກຳມະການ ແລະ ທີມງານ.<br>- ລາຍງານຜົນກະທົບ ຈາກໄພນ້ຳ ຖ້ວມໃຫ້ແກ່ຂັ້ນເທິງຂອງຕົນ. |

## ຈ. ພາລະບົດບາດ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງບັນດາຫ້ອງການທີ່ສຳຄັນ

### 1.2. ຫ້ອງການກະສິກຳປ່າໄມ້

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ກະກຽມບັນດາຂໍ້ມູນຈຸດສ່ຽງຕໍ່ການເກີດໄພພິບັດ, ຂໍ້ມູນເປົ້າໝາຍທີ່ຈະຖືກຜົນກະທົບທາງດ້ານກະສິກ (ເນື້ອທີ່ກະສິກຳ, ສະຖິຕິປູກຝັງລ້ຽງ ສັດ), ຂໍ້ມູນລະບົບຊົນລະປະທານ...<br>- ສັງລວມບັນດາຂໍ້ມູນຕ່າງໆແລ້ວລາຍງານໃຫ້ຄະນະກອງເລຂາ. ຕິດຕາມ, ເກັບກຳຂໍ້ມູນອຸທົກກະສາດ ແລະ ສົມທົບກັບກອງເລຂາລາຍງານແຈ້ງຂ່າວ. ກະກຽມພື້ນທີ່ເພື່ອຕັ້ງສູນຫລົບໄພ. ກະກຽມແນວພັນພືດ, ພັນສັດ, ປຸຍ, ຢາຕ່າງໆແລະ ເຄື່ອງສັດຕະວະແພດ. | ເຝົ້າລະວັງໄພນ້ຳຖ້ວມຢ່າງໃກ້ສິດ ແລະ ແນະນຳວິທີການຕອບໂຕ້ໃຫ້ທັນການ.ລົງພື້ນທີ່ໆຖືກກະທົບ ເພື່ອແນະນຳວິທີການຟື້ນຟູຊີວິດດ້ານການກະສິກຳ (ການປູກການລ້ຽງ).<br>ຕິດຕາມການກະທົບໃສ່ລະບົບຊົນລະປະທານ, ແນະນຳປະຊາຊົນປົກປັກຮັກສາເຮືອແພ ແລະ ເຄື່ອງຈັກສູບນ້ຳ, ພ້ອມທັງແນະນຳວິທີການກະກຽມເພື່ອ ປັບປຸງປົວແປງ ລະບົບຊົນລະປະທານ. ແຈ້ງຂ່າວພະຍາກອນເຕືອນໄພແຕ່ຫົວທີ ແລະ ແຕ່ລະໄລຍະ. ຂັ້ນເທິງຂອງຕົນ. | ປະເມີນຜົນກະທົບດ້ານກະສິກຳຈາກໄພນ້ຳຖ້ວມ. ລົງເຄື່ອນໄຫວນຳພາປະຊາຊົນປະຕິບັດແຜນການຟື້ນຟູ ທົດແທນ ( ປູກຝັງ, ລ້ຽງສັດ ແລະ ລ້ຽງປາ), ປັບປຸງປົວແປງລະບົບຊົນລະປະທານ. ສະຫລຸບຕີລາຄາຜົນການເຄື່ອນໄຫວຂອງຕົນ.ລາຍງານຜົນກະທົບ ຈາກໄພນ້ຳ ຖ້ວມໃຫ້ແກ່ |

### 1.3 ຫ້ອງການແຮງງານ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| ປະສານສົມທົບກັບຄະນະກອງເລຂາກະກຽມບັນດາສິ່ງຈຳເປັນຕ່າງໆ ສຳລັບຕອບໂຕ້ໄພນ້ຳຖ້ວມເຊັ່ນ: ຄະນະທີມງານຕ່າງໆ. ກະກຽມສະຖານທີ່ບ່ອນຕັ້ງສູນຫລົບໄພໃຫ້ປະຊາຊົນ.<br>ສົມທົບກັບອົງການຈັດຕັ້ງມະຫາຊົນ, ອົງການແນວລາວ ແລະ ອົງການຈັດຕັ້ງສັງຄົມອື່ນໆ ປຸກລະດົມຂົນຂວາຍກຳລັງເພື່ອກະກຽມຮັບມືກັບໄພພິບັດ. | - ປຸກລະດົມຂົນຂວາຍກຳລັງຊາວໜຸ່ມ ແລະ ປະຊາຊົນໃຫ້ເຂົ້າຮ່ວມປະຕິບັດກິດຈະກຳກັບທີມງານຂອງເມືອງແລະ ແຂວງ.<br>- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອອຳນວຍ ຄວາມສະ ດວກດ້ານພາຫານະ, ອຸປະກອນ ຕ່າງໆທີ່ຈຳເປັນ.<br>- ຮ່ວມກັບທີມງານແລະປະຊາຊົນ ປະຕິບັດແຜນການຕອບໂຕ້(ຍົກຍ້າຍ ຊັບສິນ, ຊ່ວຍເຫລືອຜູ້ເຈັບເປັນ....) | - ສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງ ປະເມີນຜົນກະທົບດ້ານຕ່າງໆ ຈາກໄພນ້ຳຖ້ວມ ແລະ ເຮັດບົດສະ ຫລຸບລາຍງານ.<br>- ສົມທົບກັບພາກສ່ວນຕ່າງໆເພື່ອຊ່ວຍຟື້ນຟູສະພາບຄືນໃໝ່.<br>ຮ່ວມກັບຄະນະກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງປຸກລະດົມ, ວັດຖຸປັດໃຈຊ່ວຍເຫລືອຜູ້ປະສົບໄພ. |

## 1.4. ຫ້ອງການສາທາລະນະສຸກ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ກະກຽມບັນດາຂໍ້ມູນຕ່າງໆທີ່ກ່ຽວພັນກັບພະຍາດລະບາດຕາມລະດູການ.<br>- ກະກຽມກະກຽມຮັບມືກັບໄພພິບັດ, ເຝົ້າລະວັງ ການເກີດກໍລະນີພະຍາດລະບາດ ແລະ ການບາດເຈັບຈາກການເກີດອຸປະຕິເຫດ.<br>- ກະກຽມສຖານທີ່ ເພື່ອຕັ້ງຈຸດບໍລິການຢູ່ສູນຫລົບໄພ.<br>- ກະກຽມອຸປະກອນການແພດ ແລະ ຫວ້ານຢາຕ່າງໆ. | - ລົງພື້ນທີ່ໆຖືກກະທົບເພື່ອຕິດຕາມເຝົ້າລະວັງການເກີດສະພາບເຈັບເປັນຈາກໄພພິບັດ ແລະ ພະ<br>ຍາດລະບາດ.<br>- ໃຫ້ການບໍລິການ ທາງດ້ານສາ<br>ທາລະນະສຸກເພື່ອປ້ອງກັນແລະປິ່ນປົວບັນດາພະຍາດຕ່າງໆທີ່ເກີດຂື້ນໃນໄລຍະໄພນ້ຳຖ້ວມ (ສຸຂະສຶກສາແລະກວດ/ປິ່ນປົວ). | - ລົງປະເມີນຜົນກະທົບຕໍ່ໂຄງລ່າງພື້ນຖານສາທາລະນະສຸກ, ປະເມີນຄວາມສ່ຽງຕໍ່ການເກີດພະຍາດພາຍຫລັງນ້ຳຖ້ວມ ແລະ ສະຫລຸບລາຍງານ.<br>- ລົງເຄື່ອນໄຫວ ໃຫ້ສຸຂະສຶກສາ ແລະ ນຳພາປະຊາຊົນເຮັດໜ້າທີ່ປ້ອງກັນພະຍາດ. |

## 1.5. ອົງການຈັດຕັ້ງມະຫາຊົນ ແລະ ແນວລາວສ້າງຊາດ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ສົມທົບກັບພາກສ່ວນທີ່ກ່ຽວຂ້ອງປຸກລະດົມຂົນຂວາຍກຳລັງປະຊາຊົນ (ຊາວໜຸ່ມ, ແມ່ຍິງ...) ເພື່ອກະກຽມຮັບມືກັບໄພພິບັດ.<br>- ສະຫະພັນແມ່ຍິງເປັນເຈົ້າການໃນການເຄື່ອນໄຫວປຸກລະດົມ ແລະ ສຶກ ສາອົບຮົມປະຊາຊົນກ່ຽວກັບການປູກຈິດສຳນຶກໃຫ້ເຂົ້າມະຫາຊົນເຂົ້າໃຈ. | - ປຸກລະດົມຂົນຂວາຍກຳລັງຊາວໜຸ່ມ ແລະປະຊາຊົນໃຫ້ຫ້າວຫັນ<br>ເຂົ້າຮ່ວມປະຕິບັດກິດຈະກຳກັບທີມງານຂອງເມືອງ ແລະ ແຂວງ.<br>- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນບ້ານ ແລະ ເມືອງ ເພື່ອອຳນວຍຄວາມສະດວກດ້ານພາຫານະ, ອຸປະກອນຕ່າງໆທີ່ຈຳເປັນ.<br>- ຮ່ວມກັບທີມງານແລະປະຊາຊົນປະຕິບັດແຜນການຕອບໂຕ້ (ຍົກຍ້າຍຊັບສິນ, ຊ່ວຍເຫລືອຜູ້ | - ສົມທົບກັບພາກສ່ວນທີ່ ກ່ຽວຂ້ອງ ປະເມີນຜົນກະທົບດ້ານຕ່າງໆ ຈາກໄພນ້ຳຖ້ວມ ແລະ ເຮັດບົດສະຫລຸບລາຍງານ.<br>- ສົມທົບກັບພາກສ່ວນຕ່າງໆເພື່ອລະດົມກຳລັງປະຊາຊົນຢູ່ພື້ນຖານຊ່ວຍຟື້ນຟູສະພາບຄືນໃໝ່.<br>- ຊ່ວຍຄະນະກຳມະການ ແລະ ພາກສ່ວນທີ່ກ່ຽວຂ້ອງປຸກລະດົມວັດຖຸປັດໃຈຊ່ວຍເຫລືອຜູ້ປະສົບໄພ.<br>- ສະຫະພັນແມ່ຍິງສ້າງກິດຈະ |

| | | |
|---|---|---|
| | ເຈັບເປັນ...)<br>- ສະຫະພັນແມ່ຍິງປັນເຈົ້າການໃນການປຸກລະດົມຈິດໃຈ ແລະ ສ້າງກິດ ຈະກຳຕ່າງໆເພື່ອກະກຽມຟື້ນຟູສະພາບຫລັງນ້ຳຖ້ວມ. | ກຳພື້ນຟູສະພາບຫັລງນ້ຳຖວ້ມດ້ວຍການສົ່ງເສີມການຜະລິດສິນຄ້າ... |

## *1.6. ຫ້ອງການສຶກສາເມືອງ.*

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ປະສານເກັບອຳນາດການປົກຄອງບ້ານ, ນາຍຄູ - ອາຈານ ບ່ອນທີ່ເຄີຍຖືກນ້ຳຖ້ວມ.<br>- ສົມທົບກັບອົງການຈັດຕັ້ງຂັ້ນພື້ນຖານ<br>ປຸກລະດົມຂົນຂວາມກຳລັງ ເພື່ອກະ<br>ກຽມຮັບມືກັບໄພພິບັດ.<br>( ຍົກຍ້າຍອຸປະກອນຕ່າງ ). | - ລົງພື້ນທີ່ທີ່ຖືກຜົນກະທົບເພື່ອຕິດຕາມບັນດາໂຮງຮຽນທີ່ຖືກໄພພິບັດ.<br>- ຮ່ວມກັບທີມງານຄູອາຈານ, ອຳນາດການປົກຄອງຮ່ວມກັນປະຕິບັດແຜນການຕອບໂຕ້.<br>( ຍົກຍ້າຍໂຕະ, ຕັ້ງ, ກະດານ ) | - ລາຍງານຜົນກະທົບຈາກໄພນ້ຳຖ້ວມໃຫ້ຂັ້ນເທິງຮັບຮູ້ດໂດຍໄວ້ ເພື່ອຊອກວິທີແກ້ໄຂ.<br>- ບຸກລະດົມຈິດໃຈຂອງພໍ່ແມ່ປະຊາຊົນ , ຊ່ວຍກັນພື້ນພູຄືນໃໝ່ໂດຍໄວ້.<br>( ທັນກັບການຮຽນ - ການສອນ ) |

## *1.7. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງຫີນບູນ.*

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ສົມທົບກັບ ສະມາຄົມລົດແລະ ສະມາຄົມເຮືອພາຍໃນເມືອງເພື່ອຄົ້ນຄວ້າຈັດວາງ ພາຫະນະໃນການຮັບໃຊ້.<br>- ຈັດພາຫະນະເພື່ອຮັບໃຊ້ການຊ່ວຍເຫຼືອ ຍົກຍ້າຍຊັບສິນ ແລະ ພົນລະ ເມືອງ<br>( ໃນເວລານ້ຳຖ້ວມ) | - ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກໃນເວລາ ເກີດໄພພິບັດນ້ຳຖ້ວມໃນດ້ານພາຫະນະຮັບໃຊ້ເພື່ອຂົນຍ້າຍວັດຖຸສິ່ງຂອງແລະ ພົນລະເມືອງ (ທີ່ໄດ້ຈັດໄວ້ໃນເມື່ອກ່ອນ)<br>- ຕິດຕາມການຂົນຍ້າຍຊັບສິນແລະປະຊາຊົນ,ກວດກາລະບົບເສັ້ນທາງໃນການຂົນສົ່ງລຳລຽງທຸກໄລຍະ (ຍົກຍ້າຍສິ່ງຂອງທີ່ສຳຄັນ ແລະ ຈຳເປັນ ) | - ສຳຫຼວດເກັບກຳຂໍ້ມູນຜົນເສຍ ຫາຍຈາກນ້ຳຖ້ວມຂອງບັນດາເສັ້ນທາງ,ຂົວ ແລະ ທໍ່ ຕ່າງໆ.<br>- ປະເມີນຜົນກະທົບທາງດ້ານຄົມມະນາຄົມ ຈາກໄພພິບັດນ້ຳຖ້ວມແລະເຮັດບົດສະຫຼຸບ ລາຍງານ ແກ່ຂັ້ນເທິງຂອງຕົນ.<br>- ຂື້ນແຜນຂົງົບປະມານ ໃນການສ້ອມແປງເສັ້ນທາງ ແລະ ຂົວທີ່ຖືກຜົນກະທົບຈາກໄພພິບັດນ້ຳຖ້ວມ. |

### 1.8.ຫ້ອງການແຜນການ-ສັງລວມ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ສ້າງແຜນສະຖິຕິເພື່ອເກັບກຳຂໍ້ມູນ ຈຳນວນບ້ານ, ຄອບຄົວ, ຫຼັງຄາ ເຮືອນ, ປະຊາກອນ, ເນື້ອທີ່ໄຮ່ນາ ຮົ້ວສວນ ແລະ ພາຫະນະອື່ນໆ ທີ່ຖືກ ເສຍຫາຍ.<br>- ລົງກວດກາຈຸດຫຼົບໄພເພື່ອກຽມພ້ອມໃນກາຍົກຍ້າຍປະຊາຊົນອອກຈາກພື້ນທີ່ນ້ຳຖ້ວມ.<br>-ສ້າງແຜນການຈັດຝຶກອົບຮົມໃຫ້ບັນດາບ້ານໃນເຂດທີ່ຈະໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ເພື່ອໃຫ້ເຂົາເຈົ້າຮູ້ວິທີການຊ່ວຍຕົນເອງໃນເວລານ້ຳຖ້ວມທີ່ກະທັນຫັນ ( ໃນເວລານ້ຳຖ້ວມ) | - ລົງຫາພື້ນທີ່ເກັບກຳຂໍ້ມູນບ້ານທີ່ຖືກຜົນກະທົບຈາກໄພພິບັດຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ແລະ ບ້ານທີ່ ຖືກຜົນກະທົບ ເພື່ອສັງລວມແລ້ວລາຍງານໃຫ້ຂັ້ນເທິງໂດຍໃວ. | - ປະສານກັບບັນດາອົງການ,ໂຄງການຊ່ວຍເຫຼືອລ້າ ຫຼື ໂຄງການ ທີ່ມີສ່ວນຮ່ວມຂອງລັດ ແລະ ອົງການ ສາກົນທີ່ໃຫ້ທຶນເພື່ອລົງຟື້ນຟູສະຖານທີ່ດັ່ງກ່າວໂດຍໄວ<br>- ສະຫຼູບລາຍງານຜົນການຈັດຕັ້ງ ປະຕິບັດໃຫ້ຂັ້ນເທິງຮັບຊາບໃນແຕ່ ລະໄລຍະ. |

### 1.9.ພາລະບົດບາດຖະແຫຼງຂ່າວວັດທະນະທຳ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ຕິດຕາມຂ່າວແລະແຈ້ງເຕືອນຜົນກະທົບໄພພິບັດ | - ຕິດຕາມເກັບກຳຂໍ້ມູນແຕ່ລະໄລຍະນຳສະເໜີຂັ້ນເທິງ | - ເກັບກຳຜົນເສຍຫາຍນຳຫ້ອງການແລະໜ່ວຍງານທີ່ກ່ຽວຂ້ອງເພື່ອອອກຂ່າວສູ່ມວນຊົນ |

### 10 ພາລະບົດບາດ ກ ປ ສ ແລະ ກ ປ ຊ

| ກ່ອນໄພພິບັດ | ໄລຍະໄພພິບັດ | ຫລັງໄພພິບັດ |
|---|---|---|
| - ກະກຽມວາງແຜນຈັດກຳລັງປ້ອງກັນ ເວລາເກີດໄພພິບັດ | - ເປັນເຈົ້າການໃນການຮັກສາຄວາມສະຫງົບແລະຊ່ວຍເຫຼືອໃນການຕ້ານໄພພິບັດ | - ຟື້ນຟູຊ່ວຍເຫຼືອຜູ້ປະສົບໄພພິບັດ |

## *2 ບັນດາທີມງານຄຸ້ມຄອງໄພພິບັດເມືອງ*

ທີມງານຄຸ້ມຄອງໄພພິບັດຂັ້ນເມືອງ ໄດ້ຖືກຈັດຕັ້ງຂຶ້ນໂດຍການຕົກລົງຂອງທ່ານປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ, ຊຶ່ງຮວມມີ 04 ທີມງານໃຫຍ່ ແລະ ແຕ່ລະທີມງານຈະແບ່ງອອກເປັນ 08 ຈຸ ດັ່ງນີ້:

- ✓ ທີມງານຄຸ້ມຄອງຂໍ້ມູນຂ່າວສານ/ປະສານງານ/ປະເມີນຜົນກະທົບ.
- ✓ ທີມງານຄົ້ນຫາ ແລະ ກູ້ໄພ.
- ✓ ທີມງານສາທາລະນະສຸກ.
- ✓ ທີມງານປະສານງານບັນເທົາທຸກ

ບັນດາທີມງານໃນຂ້າງເທິງນັ້ນແມ່ນມາຈາກຄະນະກຳມະການ ແລະ ຄະນະກອງເລາເປັນຜູ້ກຳນົດ ແລະ ຈັດສັນບຸກຄະລາກອນແລ້ວນຳສະເໜີການແຕ່ງຕັ້ງຈາກທ່ານປະທານເຊັ່ນຕົວຢ່າງທີມສາທາລະນະສຸກກໍແມ່ນຄະນະ ກຳມະການຈາກສາທາລະນະສຸກເປັນຜູ້ຈັດສັນດັ່ງນີ້.

### 2.1.ຫ້ອງຄວບຄຸມໄພນ້ຳຖ້ວມຢູ່ລະດັບເມືອງ

### 2.2.ນິຍາມຫ້ອງຄວບຄຸມໄພນ້ຳຖ້ວມ

ແມ່ນສະຖານທີ່ບໍລິຫານຈັດການ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນການໆ ເຄື່ອນ ໄຫວປ້ອງກັນ , ຕອບໂຕ້ ແລະ ຟື້ນຟູທົດແທນຜົນກະທົບຈາກໄພພິບັດນ້ຳຖ້ວມ, ຊຶ່ງຈະມີການປະກອບບຸກຄະລາກອນ , ພາຫານະ, ວັດຖຸອຸປະກອນ ແລະ ສິ່ງຮັບໃຊ້ອັນຈຳເປັນຕ່າງໆສຳລັບການເຄື່ອນໄຫວທີ່ມີປະສິດທິຜົນ.

### 2.3 ບຸກຄະລາກອນຂອງຫ້ອງການຄວບຄຸມໄພນ້ຳຖ້ວມ

ບຸກຄະລາກອນທີ່ປະກອບເຂົ້າໃນຫ້ອງການດັ່ງກ່າວແມ່ນມາຈາກຄະນະກຳມະການ ແລະ ຄະນະກອງເລຂາຄະນະກຳມະການດັ່ງລາຍຊື່ຕໍ່ໄປນີ້:

1.) ທ່ານ ບຸນນາກ ໄຊຍະວົງ ຫົວໜ້າຫ້ອງການ ຮສສ ເມືອງ.
2.) ທ່ານ ອ່ອນຈັນ ໄຊສັກດາ ຮອງຫົວໜ້າຫ້ອງວ່າການປົກຄອງເມືອງ.
3.) ທ່ານ ພອນຄຳ ກັດຕິຍະລາດ ວິຊາການຫ້ອງການສຶກສາ
4.) ທ່ານ ນິຄົມ ສຸຂະມຸນຕີ ຮອງຫົວໜ້າໜ່ວຍງານຄົ້ນຄວ້າ - ສັງລວມ
5.) ທ່ານ ແສງອາລຸນ ວິຊາການຫ້ອງການກະສິກຳເມືອງ.
6.) ທ່ານ ໂພໄຊ ກັດຕິຍະລາດ ວິຊາການຫ້ອງການໂຍທາເມືອງ
7.) ທ່ານ ຄຳຜັນ ພິມມະພາ ຮອງຫົວໜ້າຫ້ອງການຖະແຫຼງຂ່າວ - ວັດທະນະທຳ
8.) ທ່ານ ດຣ ລັດສະໝີ ລິມບູນຂັນ ຮອງຫົວໜ້າຫ້ອງການສາທາລະນະສຸກເມືອງ

## 2.4 ບັນຊີສິ່ງຮັບໃຊ້ສຳລັບຫ້ອງການ (ພາຫານະ, ອຸປະກອນ..)

| ລ/ດ | ລາຍການ ອຸປະກອນ | ຫົວໜ່ວຍ | ຈຳນວນ | | | ໝາຍເຫດ |
|---|---|---|---|---|---|---|
| | | | ຕ້ອງການ | ມີແລ້ວ | ເພີ່ມ | |
| 1 | ຫ້ອງການ (8ມx12ມ) | ຫລັງ | 01 | 00 | 01 | |
| 2 | ລົດຮັບໃຊ້ພາກສະໜາມ | ຄັນ | 02 | ມີແລ້ວ | 02 | Pick up 4x4 |
| 3 | ລົດໂຮງໝໍ | ຄັນ | 02 | 00 | 02 | |
| 4 | ລົດຈັກ | ຄັນ | 8 | 00 | 08 | |
| 5 | ComputerPrinter | ຊຸດ | 02 | 00 | 02 | |
| 6 | Telephone/Fax | ເຄື່ອງ | 1 | 00 | 1 | |
| 7 | ໂທລະສັບຜ່ານດາວທຽມ/ມືຖື | ເຄື່ອງ | 22 | 00 | 22 | Netcovered |
| 8 | ວິທະຍຸຕິດຕໍ່ໄລຍະໄກ້ | ເຄື່ອງ | 22 | 00 | 22 | |
| 9 | ໂທລະໂຄ່ງ | ຊຸດ | 8 | 00 | 8 | ແບບເຄື່ອນທີ່ |
| 10 | ເຄື່ອງສາຍ VDO | ເຄື່ອງ | 8 | 00 | 8 | |
| 11 | ເຄື່ອງສາຍ LCD projector. | ເຄື່ອງ | 01 | 00 | 01 | |
| 12 | ກ້ອງຖ່າຍຮູບ | ເຄື່ອງ | 8 | 00 | 8 | |
| 13 | ກ້ອງຖ່າຍ VDO | ເຄື່ອງ | 01 | 00 | 01 | |

ບັນດາບັນຊີສິ່ງຮັບໃຊ້ດັ່ງກ່າວຂ້າງເທິງນີ້ແມ່ນເປັນຊັບສົມບັດຂອງລັດ ກໍຄືຂອງຄະນະກຳມະການຂັ້ນເມືອງນັ້ນເອງ, ຊຶ່ງການນຳໃຊ້ສິ່ງດັ່ງກ່າວຕ້ອງມີລະບຽບການ ແລະ ນະໂຍບາຍຂອງ ຄະນະກຳມະການທີ່ຖືກຮັບຮອງ ແລະ ອະນຸມັດນຳໃຊ້ ໂດຍການຕົກລົງເຫັນດີຈາກ ເຈົ້າເມືອງໆຫີນບູນ

# VI ມາດຕະການຕຽມພ້ອມຕ້ານໄພນ້ຳຖ້ວມ

## 6.1.ກິດຈະກຳການຕຽມພ້ອມຕອບໂຕ້ໄພພິບັດ..

### ກ. ການປູກຈິດສຳນຶກໃຫ້ແກ່ຊຸມຊົນ

ການປູກຈິດສຳນຶກໃຫ້ແກ່ຊຸມຊົນແມ່ນມີຄວາມສຳຄັນ ແລະ ເປັນສິ່ງຈຳເປັນທີ່ຕ້ອງໄດ້ປະຕິບັດ ໃນຂົງເຂດຫລືພື້ນທີ່ໆມີຄວາມຫລໍ່ແຫລມແລະສ່ຽງຕໍ່ໄພພິບັດນ້ຳຖ້ວມ; ຊຶ່ງສິ່ງດັ່ງກ່າວ ແມ່ນ ຂະບວນການແຫ່ງການສື່ສານສຳພັນລະຫວ່າງຄະນະກຳມະການແລະພາກສວ່ນທີ່ກ່ຽວຂ້ອງໃນສັງຄົມຕະຫລອດເຖິງບັນດາຊັ້ນຄົນໃນສັງຄົມ ກັບປະຊາຊົນຜູ້ດຳລັງຊີວິດໃນເຂດສ່ຽງດັ່ງກ່າວ ໃຫ້ຮັບຮູ້ ເຂົ້າໃຈແລະປັບປ່ຽນພຶດຕິກຳຂອງຕົນທີ່ບໍ່ສອດຄ່ອງກັບການ ສ່ຽງຕໍ່ຜົນກະທົບຈາກ ໄພພິບັດ, ແລ້ວພ້ອມກັນສ້າງຄວາມຊິນເຄີຍກັບການດຳລົງຊີວິດທີ່ມີຄວາມສ່ຽງນັ້ນ ໃຫ້ກາຍມາເປັນທັດສະນະຄະຕິອັນດີເພື່ອປ້ອງກັນ,ຕອບຕ້ານແລະສ້າງກິດຈະກຳຟື້ນຟູທົດແທນຜົນກະທົບໃຫ້ຄືນສູ່ສະພາບປົກກະຕິ ແລະ ຫລີກລ້ຽງຄວາມສູນເສັຍທາງດ້ານຊີວິດ ແລະຊັບສິນຕ່າງໆ

ພາຍຫລັງໄພນ້ຳຖ້ວມ.

ເພື່ອບັນລຸຜົນສຳເລັດແຜນດັ່ງກ່າວສິ່ງສຳຄັນແມ່ນຄະນະກຳມະການຫລືທີມງານທີ່ກ່ຽວຂ້ອງຕ້ອງມີຄວາມຮັບຮູ້ຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ມີຄວາມສາມາດໃນການສື່ສານເຖິງປະຊາຊົນໃນເຂດສ່ຽງສູງ, ດັ່ງນັ້ນ, ຜູ້ຮັບຜິດຊອບແມ່ນມີຄວາມຈຳເປັນຕ້ອງມີຄວາມຮູ້ ຄວາມສາມາດ (ການຝຶກ ອົບຮົມ/ທັດສະນະສຶກສາ) ແລະ ມີເຄື່ອງມືສຳລັບໂຄສະນາເຊັ່ນ: ຂໍ້ກຳນົດກົດລະບຽບຂອງລັດ, ຄຳສັ່ງ, ບັນດາອຸປະກອນສື່ຕ່າງໆ (ເຄື່ອງສຽງ, ເຄື່ອງສາຍ, ເຄື່ອງສິ່ງພິມ, ຮູບພາບ ແລະ ຂໍ້ມູນຂ່າວ ສານອື່ນໆ....).

## ຂ. ລະບົບພະຍາກອນ ແລະ ເຕືອນໄພລ່ວງໜ້າ

ລະບົບການພະຍາກອນ ແລະ ການເຕືອນໄພລ່ວງໜ້າແມ່ນມີຄວາມສຳຄັນຫລາຍ ຕໍ່ການວາງແຜນການປ້ອງກັນ ແລະ ຕອບໂຕ້ໄພນ້ຳຖ້ວມເຊັ່ນ: ການວາງແຜນຊ່ວຍຍົກຍ້າຍ ປະຊາຊົນໄປສູ່ເຂດປອດໄພ,ຊວ່ຍອຳນວຍຄວາມສະດວກໃຫ້ແກ່ເຂົາເຈົ້າໃນການຕໍ່ສູ້ກັບໄພອັນຕະລາຍນັ້ນໆ.

ສວ່ນປະກອບຂອງລະບົບການພະຍາກອນແລະການເຕືອນໄພແມ່ນມາຈາກຫລາຍປັດ ໃຈຊຶ່ງຈະຮວມເອົາປະສົບການຕົວຈິງທີ່ປະຊາຊົນກຳຄືຊົງເຂດພື້ນທີ່ສ່ຽງໄພໄດ້ປະສົບພົບພໍ້ຜ່ານມາຈົນໄປເຖິງລະບົບການສ້າງຕັ້ງທີມງານຕິດຕາມສະພາບການ, ອາສາສະມັກເຄືອຄ່າຍປະຈຳ ແຕ່ລະຈຸດ ແລະຂໍ້ມູນຂ່າວສານທີ່ມາຈາກຫລາຍແຫລ່ງເລີ້ມຈາກຂໍ້ມູນຂອງແຂວງ, ຂອງປະເທດ, ຂອງພາກພື້ນ ແລະ ຂອງໂລກ; ນອກນັ້ນ, ບັນດາວັດຖຸອຸປະກອນອັນຈຳເປັນສຳລັບ ລະບົບນີ້ກໍ່ມີຄວາມໝາຍຫລາຍຕໍ່ການຕິດຕາມເຝົ້າລະວັງໄພພິບັດເຊັ່ນ:ເຄື່ອງໝາຍຕິດຕາມລະດັບນ້ຳ,ເຜີຍແຜ່ຂ່າວສານພະຍາກອນນ້ຳຖ້ວມ

## ຄ. ລະບົບການສ້າງແຜນງານກິດຈະກຳຕ່າງໆ

ລະບົບການວາງແຜນງານກິດຈະກຳຕ່າງໆສຳລັບປ້ອງກັນ, ຕອບຕ້ານ ແລະ ຟື້ນຟູຜົນ ກະທົບຈາກໄພພິບັດນ້ຳຖ້ວມແມ່ນການຫັນເອົາແນວທາງກຳຄືຍຸດທະສາດໃນການຕ້ານໄພພິບັດນັ້ນມາເປັນແຜນວຽກເປັນແຜນກິດຈະກຳອັນລະອຽດເພື່ອແນໃສ່ບັນລຸເປົ້າໝາຍການສູນເສັຍຊີວິດຊັບສິນ ຂອງລັດ ແລະຂອງປະຊາຊົນໃນແຂດທີ່ມີຜົນກະທົບ, ຊຶ່ງແຜນງານກິດຈະກຳຕ່າງໆ ນັ້ນຈະຕິດພັນກັບ ໂຄງປະກອບການຈັດຕັ້ງຂອງຄະນະກຳມະການ, ຄະນະກອງເລຂາ ແລະ ຄະນທີມງານຕ່າງ (ທີມງານຄຸ້ມຄອງຂໍ້ມູນຂ່າວສານ/ປະສານງານ/ປະເມີນຜົນກະທົບ, ທີມງານ ຄົ້ນຫາ ແລະ ກູ້ໄພ, ທີມງານສາທາລະນະສຸກ ແລະທີມງານປະສານງານບັນເທົາທຸກ).

### 6.2 ການປະຕິບັດມາດຕະການຕອບໂຕ້

## ກ. ການກະກຽມການຕອບໂຕ້ໄພພິບັດ..

ຄະນະກຳມະການ ແລະ ພາກສວ່ນຕ່າງໆທີ່ຮັບຜິດຊອບຕ້ອງໄດ້ມີການກຽມພ້ອມຕອບໂຕ້ໃຫ້ທັນເວລາເຊັ່ນ: ການຈັດຕັ້ງຈຸດຫລົບ ໄພໃນສະຖານທີ່ໆໄດ້ກຳນົດໄວ້ດ້ວຍການຈັດຫາເຕັ້ນ, ວັດຖຸອຸປະກອນຕ່າງໆທີ່ຈຳເປັນ (ເຄື່ອຮັບໃຊ້ ເຄື່ອງຄົວ, ເຂົ້າສານອາຫານແຫ້ງ, ນ້ຳດື່ມນ້ຳໃຊ້, ວິດຖ່າຍຊົ່ວຄາວ...), ຕຽມພ້ອມພາຫານະ ຂອງການເຄື່ອນຍ້າຍ (ເຮືອ, ລົດ, ທີມງານ ແລະ ອື່ນໆ..), ຕຽມພ້ມລະບົບການສື່ສານ ປະສານງານໃຫ້ຄົບຊຸດ, ຈັດຕັ້ງໜວ່ຍແພດປະຈຳສູນ ພ້ອມທັງອຸປະກອນ ຫວ້ານຢາໃຫ້ພຽງພໍ ແລະ ສິ່ງສຳຄັນ

ແມ່ນປຸກລະດົມກຳລັງທົ່ວຊຸມຊົນ ແລະ ພ້ອມທັງຈັດຕັ້ງການເວນຍາມ ເຝົ້າລະວັງຢ່າງເປັນປະຈຳ ຕະຫລອດ 24 ຊົ່ວໂມງ.

## ຂ. ການປະຕິບັດການຕອບໂຕ້ໄພພິບັດ..

ໃນເມື່ອສັນຍານເຕືອນໄພອັນຕະລາຍທາກເຖິງຈຸດສູງສຸດແລ້ວ, ບັນດາທີມງານ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຕະຫລອດເຖິງປະຊາຊົນໃນເຂດນັ້ນຕ້ອງໄດ້ພ້ອມກັນປະຕິບັດມາດຕະການ ຕອບໂຕ້ຢ່າງວ່ອງໄວຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນເອງເຊັ່ນ: ທີມງານຄຸ້ມຄອງຂໍ້ມູນຂ່າວສານ/ປະສານງານ/ປະເມີນຜົນກະທົບກໍຕ້ອງເພີ້ມຄວາມເອົາໃຈໃສ່ໃນການຕິດ
ຕາມໄພອັນຕະລາຍ, ເກັບກຳຂໍ້ມູນຂ່າວສານ ແລະ ລາຍງານຢ່າງເປັນປົກະຕິຂອງທຸກຊົ່ວໂມງ ພ້ອມ ນັ້ນກໍຕ້ອງໄດ້ປະສານຂໍ ຄວາມຊ່ວຍເຫລືອຈາກທີມງານອື່ນໃນກໍລະນີຈຳເປັນ; ທີມງານຄົ້ນຫາ ແລະ ກູ້ໄພກໍຕ້ອງໄດ້ພ້ອມກັນປະຕິບັດມາດຕະການຄົ້ນຫາ, ກອບກູ້ ແລະ ເຄື່ອນຍ້າຍສິ່ງຕ່າງໆ (ຄົນ, ສັດລ້ຽງ, ວັດຖຸສິ່ງຂອງ..) ໄປສູ່ສູນຫລົບໄພທີ່ໄດ້ຈັດສັນໄວ້; ທີມງານສາທາລະນະສຸກກໍເຮັດໜ້າທີ່ໂຄສະນາ ສຸຂະສຶກສາ, ພ້ອມທັງໃຫ້ການປິ່ນປົວຜູ້ທີ່ຖືກບາດເຈັບ ແລະ ເປັນພະຍາດ; ສ່ວນທີມງານປະສານງານຟື້ນຟູ ແລະ ບັນເທົາທຸກກໍເຮັດໜ້າທີ່ຄຸ້ມຄອງສະຖານທີ່ສູນຫລົບໄພ, ຊ່ວຍເຫລືອສິ່ງຈຳເປັນ ເພື່ອ ບັນເທົາທຸກໃນພາວະສຸກເສີນ, ເຮັດການປຸກລະດົມແນວຄິດຂອງປະຊາຊົນໃຫ້ອຸ່ນອ່ຽນ ແລະ ໃຫ້ບົດຮຽນປູກຈິດສຳນຶກໃຫ້ແກ່ປະຊາຊົນເພື່ອຫລຸດຜ່ອນຜົນກະທົບພາຍຫລັງນ້ຳຖ້ວມດວ້ຍການອົບຮົມແນະນຳວິ ທີປູກ, ວິທີລ້ຽງ, ວິທີປັບປຸງປົວແປງອາຄານບ້ານເຮືອນ ແລະ ສິ່ງສາທາລະນະ (ລະບົບຊົນລະປະທານ, ໂຮງຮຽນ, ໂຮງໝໍ, ວັດວາ...) ໃຫ້ຄືນສູ່ສະ ພາບປົກກະຕິ.

# VII ການປັບປຸງຟື້ນຟູໃຫ້ຄືນສູ່ສະພາບເດີມ

### *7.1 ກິດຈະກຳຂອງການປັບປຸງເພື່ອໃຫ້ກັບຄືນສູ່ສະພາບເດີມ*

ພາຍຫລັງໄພພິບັດນ້ຳຖ້ວມໄດ້ຢຸດຕິລົງ ຄະນະກຳມະການ, ຄະນະກອງເລຂາ ແລະ ພາກສ່ວນທີ່ກ່ຽວຂ້ອງກໍຕ້ອງໄດ້ພ້ອມກັນຈັດຕັ້ງປະຕິບັດພາລະບົດບາດ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນໃນໄລຍະຫລັງຈາກນ້ຳຖ້ວມ, ຊຶ່ງສິ່ງສຳຄັນແມ່ນການເກັບກຳຂໍ້ມູນ ແລະ ສະຫລຸບປະເມີນຜົນກະທົບຈາກນ້ຳຖ້ວມ ພ້ອມທັງເຮັດໜ້າທີ່ຟື້ນຟູທົດແທນຜົນກະທົບດັ່ງກ່າວໃຫ້ກັບຄືນສູ່ສະພາບປົກກະຕິ; ສະນັ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍນັ້ນ ມີຄວາມຈຳເປັນຫລາຍຕ້ອງໄດ້ຄາດຄະເນຄວາມຕ້ອງການບັນດາສິ່ງຈຳເປັນຕ່າງໆ ໂດຍອີງໃສ່ການສົມທຽບຜົນກະທົບຈາກໄພພິບັດໃນຄັ້ງຜ່ານມາ ທີ່ໄດ້ຮັບຜົນເສຍຫາຍຫຼາຍໂດຍສະເພາະແມ່ນດ້ານຂົງເຂດເສດຖະກິດ ແລະ ວັດທະນະທຳ-ສັງຄົມ.

*** ຕາຕະລາງສະແດງຜົນເສັຍຫາຍຈາກຜົນກະທົບໄພນ້ຳຖ້ວມປີ 2005**

| ລ/ດ | ເນື້ອໃນລາຍການ | ມູນຄ່າເສັຍຫາຍ (ກີບ) | ໝາຍເຫດ |
|---|---|---|---|
| 1 | **ຜົນກະທົບດ້ານກະສິກຳ:** | 243.096.500 | |
| | ການປູກຝັງ (ນາປີ) | 16.096.500 | |
| | ຊົນລະປະທານ | 20.000.000 | |
| | ການລ້ຽງສັດ | 207.000.000 | |

**+ ຕາຕະລາງສະແດງຜົນເສັຍຫາຍຈາກຜົນກະທົບໄພນ້ຳຖ້ວມປີ 2005 (ຕໍ່)**

| ລ/ດ | ເນື້ອໃນລາຍການ | ມູນຄ່າເສັຍຫາຍ (ກີບ) | ໝາຍເຫດ |
|---|---|---|---|
| 2 | **ດ້ານວັດທະນະທຳສັງຄົມ:** | 21.800.000 | |
| | ການສຶກສາ | 15.300.000 | |
| | ສາທາລະນະສຸກ | 3.800.000 | |
| 3 | ວັດວາອາລາມ | 2.700.000 | |
| 4 | **ດ້ານໂຄງລ່າງພື້ນຖານຄົມມະນາຄົມ** | **9,196,000,000** | |
| | ລວມ | **9.127.800.000** | |

ຈັດຕັ້ງປະຕິບັດແຜນການບູລະນະ ແລະ ຟື້ນຟູທິດແທນຕາມແຜນງານກິດຈະກຳຕ່າງໆ, ບົນພື້ນຖານການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງບັນດາຂະແໜງການທີ່ກ່ຽວຂ້ອງຕາມການກຳນົດໄວ້ໃນຂ້າງເທິງນັ້ນ.

ຫ້ອງການຄວບຄຸມໄພພິບັດ ຫລື ກອງເລຂາຄະນະກຳມະການປະສານສົມທົບກັບກັບບັນດາຂະແໜງການຕ່າງໆໃນການຕິດຕາມ ຊຸກຍູ້ ປະເມີນ ແລະ ສະຫລຸບລາຍຜົນການຈັດຕັ້ງ ປະຕິບັດແຜນການໃນແຕ່ລະໄລຍະ.

## 8. ມາດຕະການການຫລຸດຜ່ອນ

### *8.1 ໂຄງສ້າງຂອງການຫລຸດຜ່ອນ*

#### 8.1.1 ການກໍ່ສ້າງທົນທາງແລະສ້ອມແປງຈະຕ້ອງໄດ້ຍົກລະດັບໜ້າທາງຂຶ້ນ

*** ພາກສວ່ນການສ້າງທົນທາງແລະສ້ອມແປງ**

| ລ/ດ | ຊື່ທາງຈາກຈຸດເລີ້ມ ຫາ ຈຸດສຸດທ້າຍ | ລວງຍາວ (Km) | ສະພາບທົນທາງ | ໝາຍເຫດ |
|---|---|---|---|---|
| 1 | ເສັ້ນທາງ ເລກທີ 13 b | 62 | ທາງດິນແດງ, ລະດັບໜ້າທາງຕ່ຳ | ຈຳເປັນໃນການສ້ອມແປງ |
| 2 | ເສັ້ນທາງບໍ່ໂພນຕິ້ວ | 25 | ທາງດິນແດງ, ລະດັບໜ້າທາງຕ່ຳ | ຈຳເປັນໃນການສ້ອມແປງ |
| 3 | ເສັ້ນທາງບ້ານພົງ | 9 | ທາງດິນແດງ, ລະດັບໜ້າທາງຕ່ຳ | ຈຳເປັນໃນການສ້ອມແປງ |
| 4 | ເສັ້ນທາງບ້ານປຸ່ງເໜືອ | 12 | ທາງດິນແດງ, ລະດັບໜ້າທາງຕ່ຳ | ຈຳເປັນໃນການສ້ອມແປງ |
| 5 | ເສັ້ນທາງ ບ້ານຫາດ | 9 | ທາງດິນແດງ, ລະດັບໜ້າທາງຕ່ຳ | ຈຳເປັນໃນການສ້ອມແປງ |

| | | | | |
|---|---|---|---|---|
| | ລວມລວງຍາວ | 117 | | |

### *8.2 ການກຽມພ້ອມທາງດ້ານໂຄງສ້າງ*

ທາງດ້ານນີ້ແມ່ນການເສີມສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ແກ່ຊຸມຊົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງໂດຍການຈັດຕັ້ງປະຕິບັດກິດຈະກຳຕ່າງໆຄື:

- ✓ ການປູກຈິດສຳນຶກໃຫ້ແກ່ປະຊາຊົນ ເພື່ອໃຫ້ການຟື້ນຟູແນວຄິດຈິດໃຈຂອງປະຊາຊົນຜູ້ຖືກກະທົບ ແລະ ສຶກສາອົບຮົມ ແນະນຳວິທີການຕ່າງໆເພື່ອປັບປຸງປົວແປງສະພາບຜົນກະທົບໃຫ້ກັບຄືນສູ່ພາວະເດີມ.
- ✓ ສ້າງຕັ້ງອົງການຈັດຕັ້ງສັງຄົມໃນຂົງເຂດຖືກກະທົບ ເພື່ອຊ່ວຍເຄື່ອນໄຫວຈັດຕັ້ງປະຕິບັດກິດຈະກຳນຳຄະນະກຳມະການເປັນຕົ້ນແມ່ນ ການສ້າງຕັ້ງກອງທຶນ ຫລື ການຊ່ວຍໂຄສະນາປະຊາສຳພັນຂໍ້ມູນຂ່າວສານຕ່າງໆດັ່ງນີ້ເປັນຕົ້ນ..
- ✓ ການນຳເອົາຫລັກສູນການຮຽນການສອນກ່ຽວກັບໄພພິບັດເຂົ້າສູ່ໂຮງຮຽນ.
- ✓ ການວາງແຜນນ້ຳໃຊ້ທີ່ດິນ ແລະ ອື່ນໆ..
- ✓ ການສ້າງແຜນທີ່ນ້ຳຖ້ວມ ແລະ ການກຳນົດຈຸດຫລົ່ແຫລມ..
- ✓ ການສ້າງ ແລະ ປັບປຸງລະບົບເຕືອນໄພ.

### 9. ການຈັດສັນງົບປະມານ ແລະ ຄວາມຕ້ອງການແຫລ່ງຊັບພະຍາກອນອື່ນໆ

ໃນແຕ່ລະໄລຍະຂອງການຕ້ານໄພພິບັດນ້ຳຖ້ວມ (ໄລຍະທ້າງຫາກະກຽມ/ໄລຍະຕອບໂຕ້ ແລະໄລຍະຟື້ນຟູ ແລະ ປົວແປງຄືນ) ແມ່ນລ້ວນແລ້ວແຕ່ມີຄວາມສຳຄັນ ແລະ ຈຳເປັນທີ່ສຸດໃນການຈັດສັນງົບປະມານ, ແຫລ່ງທຶນ ແລະ ບັນດາຊັບພະຍາກອນຕ່າງໆທີ່ຕ້ອງການ, ຊຶ່ງການຈັດສັນ ແລະ ແບ່ງປັນສິ່ງດັ່ງກ່າວນັ້ນແມ່ນອີງຕາມໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນໃນຄະນະກຳມະການ ແລະ ທີມງານຕ່າງໆ; ລາຍລະອຽດຂອງແຜນງົບປະມານມີດັ່ງຕາຕະລາງຕໍ່ໄປນີ້:

ແຜນການຕຽມພ້ອມໄພນ້ຳຖ້ວມປະຈຳສົກປີ 2009-2015 (ສະບັບທີ່ 1)

**ແຜນງົບປະມານສຳລັບຕອບໂຕ້ໄພນ້ຳຖ້ວມທີ່ເມືອງ ຫີນບູນ, ປະຈຳສົກປີ 2009-2010.**

| ລ/ດ | ແຜນງານ, ກິດຈະກຳ | ພື້ນທີ່ປະຕິບັດ (ເມືອງ,ບ້ານ) | ຜູ້ຮັບຜິດຊອບ | ເວລາ ປະຕິບັດ | ງົບປະມານ (USD) | ແ ຫ ລ່ ງ ທຶນ |
|---|---|---|---|---|---|---|
| 1 | ແຕ່ງຕັ້ງຄະນະກຳມະການ ແລະຄະນະປະສານງານ | District | District | 2009 | 150 | |
| 2 | ສ້າງຕັ້ງຫ້ອງການຄະນະກຳມະການ/ປະສານງານ ແລະ ເຄື່ອງປະກອບ | District | PSWD/District | 2009 | 85,000 | |
| 3 | ສ້າງຕັ້ງທີມງານແພດ ແລະ ປະກອບສິ່ງຈຳເປັນ (ຮວມໂຮງໝໍເມືອງນຳ) | Districts | PHD | 2009-2010 | 315,000 | |
| 4 | ສ້າງຕັ້ງທີມງານກູ້ໄພ ແລະເຄື່ອນຍ້າຍຜູ້ປະສົບໄພ | Districts | DPO & DSO | 20009 | 71,000 | |
| 5 | ເກັບກຳຂໍ້ມູນຂ່າວສານ ແລະ ສ້າງແຜນ | Village | PSWD/PAFD | 2009- 10 | 3,000 | |
| 6 | ສ້າງແຜນເພື່ອຂໍແຫລ່ງທຶນຕຽມພ້ອມຕ້ານໄພນ້ຳຖ້ວມ | 14 Risk Villages | PSWD/PAFD | 2009-10 | 2,300 | |
| 7 | ກອງປະຊຸມ DDMC ໃຫ້ຄວາມຮູ້ກ່ຽວກັບການຄຸ້ມ ຄອງໄພພິບັດ. | District | DDMC | | 2,300 | |
| 8 | ກອງປະຊຸມສະຫລຸບ,ຖອດຖອນບົດຮຽນ,ວາງແຜນ | District | DDMC | 3ຄັ້ງ 09 - 10 | 2,500 | |
| 9 | ສ້າງ ແລະ ພັດທະນາຄວາມສາມາດຂອງຄະນະກຳມະການ ແລະທີມງານ:<br>✓ ຝຶກອົບຮົມຄະນະກຳມະການ/ຄະນະປະສານງານ.<br>✓ ຝຶກອົບຮົມທີມງານແພດ/ທີມງານກູ້ໄພ.<br>✓ ກຳມະການ/ທີມງານໄປທັດສະນະສຶກສາພາຍໃນ ແລະ ຕ່າງປະເທດ. | <br><br>District<br>District<br>Domestic/Oversea | <br><br>NDMC/PDMC<br>NDMC/PDMC<br>NDMC/PDMC | <br><br>2009-10<br>2009-10<br>2009-10 | <br><br>4,000<br>4,800<br>18,000 | |
| 10 | ນຳຫັລກສູດໄພພິບັດເຂົ້າໃນໂຮງຮຽນ. | 42 Primary School | PED | 2009-10 | 42,000 | |
| 11 | ສ້າງເຄືອຄ່າຍການກະຈາຍຂ່າວ | Districts | PDMC/Cutural | 2009-10 | 6,000 | |
| 12 | ສ້າງລະບົບຕິດຕາມສະພາບແວດລ້ອມ, ປະເມີນ ຜົນກະທົບ ແລະ | Districts | PSWD | 2009-10 | 25,000 | |

| | | | | | | |
|---|---|---|---|---|---|---|
| | ເຄື່ອນໄຫວເຝົ້າລະວັງໄພສຸກເສີນ. | | | | | |
| 13 | ລົງປູກຈິດສຳນຶກໃຫ້ແກ່ຊາວບ້ານ ສຳລັບການຊ່ວຍເຫລືອຕົນເອງ. | Target Villages | PDMC/DDMC | July 09 | 12,000 | |
| 14 | ສ້າງຕັ້ງກອງທຶນພັດທະນາບ້ານ. | 14 Risk Villages | PSWD/PAFD | 2009-10 | 34,000 | |
| 15 | ສ້າງຕັ້ງກອງທຶນສົ່ງເສີມແມ່ຍິງ. | 14 Risk Villages | PSWD/PAFD | 2009-10 | 18,000 | |
| 16 | ກະກຽມເງື່ອນໄຂຕ່າງໆທີ່ຈຳເປັນເພື່ອຕອບໂຕ້ໄພພິບັດ (ບຸກຄະລາກອນ, ອຸປະກອນເຄື່ອງໃຊ້ໃນຈຸດຫລົບໄພ) | Districts | PDMC/DDMC | 2009-10 | 70,000 | |
| 17 | ເຄື່ອນໄຫວຕອບໂຕ້ໄພພິບັດ (ປ້ອງກັນ/ກອບກູ້...) | 14 Risk Villages | PDMC/DDMC | 2009-10 | 146,000 | |
| 18 | ສຳຫລວດ ປະເມີນຜົນເສັຍຫາຍ/ສ້າງແຜນຊວ່ຍເຫລືອບັນເທົາທຸກ. | Villages/District | PDMC/DDMC | 2009-10 | 4,200 | |
| 19 | ຈັດຕັ້ງການຟື້ນຟູ ແລະ ຊວ່ຍເຫລືອບັນເທົາທຸກ. | 14 Risk Villages | PDMC/DDMC | 2009-10 | 300,000 | |
| 20 | ສຶກສາ/ຄົ້ນຄວ້າມາດຕະການປ້ອງກັນໃນຕໍ່ໜ້າ. | District | PDMC/DDMC | 2009-10 | 7,000 | |
| | **ລວມທັງໝົດ** | | | | **1,172,250** | |

ການຈັດສັນ ແລະ ແບ່ງປັນງົບປະມານ, ພ້ອມທັງພາຫານະ ແລະ ວັດຖຸອຸປະກອນຕ່າງໆ ແມ່ນຂຶ້ນກັບການຈັດຕັ້ງໂຄງປະກອບຂອງຄະນະກຳມະການ, ທີມງານຕ່າງໆ ບົນພື້ນຖານການຕິດຕາມ ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນງານ ກິດຈະກຳໃນແຕ່ລະໄລຍະ; ນອກນັ້ນ, ກໍຕ້ອງໄດ້ມີການສະຫລຸບລາຍງານຜົນການເຄື່ອນໄຫວຢ່າງເປັນປົກກະຕິ.

| | | |
|---|---|---|
| ຫີນບູນ, ວັນທີ ......................... | ຫີນບູນ, ວັນທີ ............................ | ຫີນບູນ, ວັນທີ ............................ |
| ຮອງ ເຈົ້າເມືອງໆຫີນບູນ | ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ | ຫົວໜ້າຫ້ອງວ່າການປົກຄອງເມືອງ |
| (ປະທານ DDMC) | (ຄະນະກຳມະການ DDMC) | (ຫົວໜ້າກອງເລຂາ DDMC) |

แผนการตງมพ้อมໄພນ້ຳຖ້ວມປະຈຳສົກປີ 2009-2015 (ສະບັບທີ່ 1)

**ສັງລວມ ແຜນການຍົບຍ້າຍຈັດສັນບັນດາບ້ານ ທີ່ຖືກກະທົບຈາກໂຄງການໄຟຟ້າ ເທີນ -ຫີນບູນ ເຂດລຸ່ມເຂື່ອນ**

| ຈຸດທີ່ | ຈຸດຈະຍົກຍ້າຍໄປ | ຊື່ບ້ານເດີມ | ຈຳນວນຫັລງຄາ | ຈຳນວນຄອບຄົວ | ຈຳນວນພົນ | ໝາຍເຫດ |
|---|---|---|---|---|---|---|
| | ບຸລິມະສິດໄລຍະທີ່ 1: | | | | | |
| 1 | ຈຸດພູໝາກແໜ່ງ(ປຳ້ນ້ຳມັນ) | ບ້ານດອນ | 34 | 34 | 202 | |
| | | ຜາໂກນໂກ | 37 | 36 | 225 | |
| | | ນາສະກອງ | 23 | 24 | 130 | |
| | | ແກ້ງຄົດ | 46 | 54 | 288 | |
| | | ແຄນ | 45 | 54 | 244 | |
| | **ລວມ** | _ | **185** | **202** | **1,089** | |
| 2 | ຈຸດພູຊາດ | ບ້ານດອນ | 27 | 27 | 140 | |
| | | ວັງດາວ | 38 | 35 | 207 | |
| | | ນາພອກ,ກົງພັດ,ຫາດຊາຍຄ້າງ | 192 | 221 | 1,105 | |
| | **ລວມ** | _ | **257** | **283** | **1,452** | |
| 3 | ຈຸດຕີນພູຜາຂວາກ | ນາຄຶກ | 111 | 124 | 632 | |
| | | ທົ່ງລິມ | 69 | 71 | 426 | |
| | | ຜາງແດງ | 66 | 65 | 382 | |
| | ລວມ | | **246** | **260** | **1,440** | |
| 4 | ຈຸດຜາຊ້າງ | ຜາຮ້າງເໜືອ+ໄຕ້ | 79 | 88 | 460 | |
| | | ທ່ານາເໜືອ+ໄຕ້ | 167 | 178 | 1,010 | |
| | | ຜາຈິວ | 18 | 18 | 118 | |
| | ລວມ | | **264** | **284** | **1,588** | |
| 5 | ຈຸດພູຫ້ວຍເດື່ອ | ບ້ານຊາງ | 45 | 47 | 244 | |

| | | | | | | |
|---|---|---|---|---|---|---|
| | | ວັງມີນ | 62 | 71 | 346 | |
| | ລວມ | | 107 | 118 | 590 | |
| 6 | ຈຸດພູຫ້ວຍລັດ | ສອງຄອນ | 47 | 53 | 283 | |
| | | ປາກທິກ | 32 | 40 | 210 | |
| | ລວມ | | 79 | 93 | 493 | |
| 7 | ຈຸດພູຊີ້ເລັກ | ປາກແຫ່ວງ | 50 | 49 | 281 | |
| ລວມ ບຸລິມະສິດໄລຍະ ທີ1: | | | 1,188 | 1,289 | 6,933 | |
| | ບຸລິມະສິດໄລຍະທີ 2: | | | | | |
| 1 | ຈຸດ ທົ່ງນາຈານ(ແຄມທາງກອງລໍ) | ບ້ານ ຜາຄ້ອງ | 46 | 44 | 286 | |
| 2 | ຈຸດ ຫ້ວຍປາຄູນ(ແຄມທາງກອງລໍ) | ບ້ານ ໜອງຮາງ | 84 | 77 | 477 | |
| | | ບ້ານ ໂພທອງ | 35 | 42 | 232 | |
| | ລວມ | | 119 | 119 | 709 | |
| 3 | ຈຸດ ປາກທາງບ້ານທ່າ (ແຄມ ທາງກອງລໍ) | ບ້ານ ກາງ(ບ້ານທ່າ) | 103 | 103 | 618 | |
| 4 | ຈຸດຝັ່ງບ້ານຈັດສັນຄູນຄຳ | ບ້ານ ຖ້ຳແຕ້ມ | 27 | 27 | 162 | |
| ລວມ ບຸລິມະສິດໄລຍະ ທີ 2: | | | 295 | 293 | 1,775 | |
| | **ຈຸດ ທີ່ບໍ່ນອນໃນແຜນຍັບຍ້າຍ ຂອງ ໂຄງກາ ແຕ່ຂໍຍັບຍ້າຍ** | | | | | |
| 1 | ຈຸດ ດົງໜອງຜື | ບ້ານ ນາຄຳ | 80 | 76 | 412 | |
| 2 | ຈຸດ ດອນເຜີ້ງ | ບ້ານ ນາຊ້າງຂ້າມ | 64 | 61 | 416 | |
| | ລວມ ທີ່ບໍ່ນອນໃນແຜນຍັບຍ້າຍ ຂອງ ໂຄງການ ແຕ່ຂໍຍັບຍ້າຍ | | 144 | 137 | 828 | |
| | | | | | | |
| **ລວມທັງໝົດ ສັງລວມໃນໄລຍະຕົ້ນ:** | | | 1,627 | 1,719 | 9,536 | |

## 10. ເອກະສານຊ້ອນທ້າຍ

### *10.1 ບັນຊີແຫລ່ງຊັບພະຍາກອນ ແລະ ບຸຄະລາກອນ*

ບັນຊີຕ່າງໆກ່ຽວກັບດ້ານນີ້ໄດ້ສະເໜີໄວ້ຢູ່ໃນຂໍ້ 3.3 ແລະ ຂໍ້ 4 ແລ້ວ.

### *10.2 ບັນຊີໂຄງສ້າງພື້ນຖານ*

ບັນຊີຕ່າງໆກ່ຽວກັບດ້ານນີ້ໄດ້ສະເໜີໄວ້ຢູ່ໃນຂໍ້ 3.3 ແລະ ຂໍ້ 4 ແລ້ວ.

### 10.3 ເລກໂທລະສັບທີ່ສຳຄັນ.

| ລ/ດ | ຊື່, ນາມສະກຸນຫົວໜ້າ | ຕຳແໜ່ງ | ເບີໂທລະສັບ |
|---|---|---|---|
| 1 | ທ່ານ ຄຳເພົາ ດວງພິໃສ | ປະທານ ຄະນະກຳມະການ | 020 7754 371 |
| 2 | ທ່ານ ບຸນນາກ ໄຊຍະວົງ | ຮສສ/ ຮອງປະທານ | 020 5627 015 |
| 3 | ທ່ານ ອ່ອນຈັນ ໄຊສັກດາ | ຮອງຫົວໜ້າຫ້ອງວ່າການ/ກອງເລຂາ | 020 2328 087 |
| 4 | ທ່ານ ພອນຄຳ ກັດຕິຍາລາດ | ສຶກສາ/ ກອງເລຂາ | 020 5751 434 |
| 5 | ທ່ານ ແສງອາລຸນ | ກະສິກຳ/ ກອງເລຂາ | 020 5222 305 |
| 6 | ທ່ານ ນິຄົມ ສຸຂະມຸນຕີ | ຫ້ອງການສັງລວມ/ກອງເລຂາ | 020 5074 091 |
| 7 | ທ່ານ ໂພໄຊ ກັດຕິຍາລາດ | ຍທຂ / ກອງເລຂາ | 020 6548 788 |
| 8 | ທ່ານ ຄຳຜັນ ພິມມະພາ | ວັດທະນະທຳ/ກຳມະການ | 020 2339 284 |
| 9 | ທ່ານ ຖາວອນ ແກ້ວຄຳພັນ | ໂຄສະນາອົບຮົມ/ກຳມະການ | 020 6634 725 |